ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-23 ກຸມພາ 2023
ປີທີ 12
ສະບັບທີ 910
ລາຍສັປະດາ

## ປະທານສະພາແຫ່ງຊາດລາວ ພົບປະກັບນາຍົກລັດຖະມົນຕີກຳປູເຈຍ



(ສພຊ) ໃນຕອນບ່າຍຂອງວັນທີ 13 ກຸມພາ 2023, ທີ່ສະພາແຫ່ງຊາດ, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ພົບປະກັບສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນ ແຊນ ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກກຳປູເຈຍ, ໃນໂອກາດເດີນທາງມາຢ້ຽມຢາມ ສປປລາວ ຢ່າງເປັນທາງການ ໃນລະຫວ່າງວັນທີ 13-14 ກຸມພາ 2023.

ໃນໂອກາດນີ້, ພະນະທ່ານປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ການຢ້ຽມຢາມ ສປປລາວ ຂອງສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນ ແຊນ ແລະ ຄະນະ ໃນຄັ້ງນີ້ ເຊິ່ງໄດ້ນຳເອົາໄມຕີຈິດມິດຕະພາບອັນອົບອຸ່ນຂອງພັກ, ລັດຖະບານ, ສະພາແຫ່ງຊາດ ແລະ ປະຊາຊົນກຳປູເຈຍ ມາສູ່ພັກ, ລັດຖະບານ, ສະພາແຫ່ງຊາດ ແລະ ປະຊາຊົນລາວບັນດາເຜົ່າ ທັງເປັນການຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ການພົວພັນແບບຄູ່ຮ່ວມຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງ ສປປລາວ ແລະ ຣາຊະອານາຈັກກຳປູເຈຍ ໃຫ້ນັບມື້ນັບໄດ້ຮັບການພັດທະນາຍິ່ງໆຂຶ້ນ.

ພ້ອມນີ້, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ກໍໄດ້ຝາກຄວາມຢື້ຢາມຖາມຂ່າວເຖິງພະບາດສົມເດັດ ໂນໂຣດົມ ສີຫາໂມນີ ພະມະຫາກະສັດ; ສົມເດັດ ອັກຄະມະຫາໂປເຍຍ ຈັກກຼີ ເຮັງ ຊຳຣິນ ປະທານສະພາແຫ່ງຊາດ; ແລະ ສົມເດັດ ວິບູນ ເສນາ ພັກດີ ຊາຍຊຸມ ປະທານສະພາສູງ

ອ່ານຕໍ່ໜ້າ 2

## ທ່ານ ປອ. ໄຊສົມພອນ ພົມວິຫານ ໂອ້ລົມ ແລະ ໃຫ້ທິດຊີ້ນຳ ກອງປະຊຸມຂອງອົງການໄອຍະການປະຊາຊົນສູງສຸດ ທົ່ວປະເທດ



(ສພຊ) ໃນວັນທີ 14 ກຸມພາ 2023, ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ໃຫ້ກຽດເຂົ້າຮ່ວມໂອ້ລົມ ແລະ ໃຫ້ຊີ້ນຳຕໍ່ກອງປະຊຸມວຽກງານຕິດຕາມກວດກາການດຳເນີນຄະດີອາຍາທົ່ວປະເທດ ຄັ້ງທີ I ແລະ ກອງປະຊຸມສະຫຼຸບການຈັດຕັ້ງຜັນຂະຫຍາຍວາ

ອ່ານຕໍ່ໜ້າ 4

## ປຶກສາຫາລືແຜນການສ້າງ ແລະ ພັດທະນາວິທະຍາກອນຂອງສະພາແຫ່ງຊາດ



(ສພຊ) ໃນວັນທີ 9 ກຸມພາ 2023 ທີ່ສະພາແຫ່ງຊາດ ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມປຶກສາຫາລືແຜນການສ້າງ ແລະ ພັດທະນາວິທະຍາກອນຂອງສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງ

ອ່ານໜ້າ 2

## ຮອງປະທານສະພາແຫ່ງຊາດ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4





(ສພຊ) ໃນວັນທີ 14-15 ກຸມພາ 2023, ທ່ານ ພົທ. ສຸວອນ ເລື່ອງບຸນມີ ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ຮ່ວມກັບທ່ານ ເພັງນີລັນ ຄຳພັນ ປະທານຄະນະ

ອ່ານຕໍ່ໜ້າ 3

## ຍົກສູງຂີດຄວາມສາມາດວຽກງານການຕ່າງປະເທດ ໃຫ້ພະນັກງານ-ວິຊາການ ຂອງ ສພຊ ແລະ ສພຂ



(ສພຊ) ໃນລະຫວ່າງວັນທີ 13-14 ມັງກອນ 2023 ທີ່ສະພາແຫ່ງຊາດ (ສພຊ) ນະຄອນຫຼວງວຽງຈັນ, ກຳມາທິການການຕ່າງປະເທດ ສະພາແຫ່ງຊາດ ໄດ້ຈັດກອງປະຊຸມຍົກສູງຂີດຄວາມສາມາດໃນການປະຕິບັດໜ້າທີ່ວຽກງານໃຫ້ແກ່ພະນັກງານ-ວິຊາການ ຂອງ ສພຊ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ໃນທົ່ວປະເທດ ທີ່ເປັນເສນາທິການໃຫ້ແກ່ການເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ແລະ ທ່ານ ນາງ ວັນດີ ບຸດທະສະວົງ ຮອງປະທານກຳມາທິການການຕ່າງປະເທດ; ມີບັນດາຫົວໜ້າກົມ, ຮອງຫົວໜ້າກົມ, ຄະນະ

ອ່ານຕໍ່ໜ້າ 3



### ສຳເລັດການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4...

ອ່ານຕໍ່ໜ້າ 5



### ກອງປະຊຸມສະໄໝສາມັນເທື່ອທີ 4...

ອ່ານຕໍ່ໜ້າ 6



### ກອງປະຊຸມຄົບຄະນະ...

ອ່ານຕໍ່ໜ້າ 7

# ຍົກສູງຂີດຄວາມສາມາດການເປັນເສນາທິການດ້ານວຽກງານສະມາຊິກສະພາແຫ່ງຊາດ



(ສພຊ) ກອງປະຊຸມຍົກສູງຂີດຄວາມສາມາດໃນການເປັນເສນາທິການ ໃຫ້ແກ່ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ໄດ້ມີຂຶ້ນ ແລະ ສຳເລັດລົງໃນລະຫວ່າງວັນທີ 2-3 ກຸມພາ 2023 ຢູ່ທີ່ນະຄອນຫຼວງວຽງຈັນ ເພື່ອຍົກສູງຂີດຄວາມສາມາດການເປັນເສນາທິການໃຫ້ແກ່ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ເພື່ອແນະນຳຮ່າງບົດສະຫຼຸບ-ລາຍງານການເຄື່ອນໄຫວ ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ເພື່ອການເກັບກຳສະຖິຕິພົນລະເມືອງລາວ ໂດຍຕິດພັນກັບຜູ້ມີສິດປ່ອນບັດເລືອກຕັ້ງ ທັງເປັນການເຜີຍແຜ່ກົດໝາຍວ່າດ້ວຍເອກະສານທາງລັດຖະການ.

ກອງປະຊຸມຄັ້ງນີ້ ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການ, ຄະນະກົມ, ຄະນະພະແນກ ພາຍໃນກຳມາທິການດັ່ງກ່າວ, ບັນດາທ່ານຫົວໜ້າ-ຮອງຫົວໜ້າຂະແໜງຊ່ວຍວຽກຄະນະສະມາຊິກສະພາແຫ່ງຊາດ, ຫົວໜ້າ-ຮອງຫົວໜ້າຂະແໜງຂອງ 3 ຄະນະກຳມະການສະພາປະຊາຊົນແຂວງ ຈາກ 18 ເຂດເລືອກຕັ້ງທົ່ວປະເທດ ເຊິ່ງມີວິທະຍາກອນຜູ້ຊົງຄຸນວຸດທິຂອງກຳມາທິການດັ່ງກ່າວ, ຈາກກະຊວງແຜນການ ແລະ ການລົງທຶນ ແລະ ຈາກກະຊວງພາຍໃນ.

ວາລະກອງປະຊຸມ, ທ່ານ ຄຳສິງ ໄຊສົມແພງ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ສະເໜີຫົວຂໍ້ຍົກສູງຂີດຄວາມສາມາດການເປັນເສນາທິການໃຫ້ແກ່ກຳມາທິການວຽກງານສະພາມາຊິກສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ທ່ານ ວຽງແກ້ວ ວັນນະຈັກ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ສະເໜີຫົວຂໍ້ແນະນຳຮ່າງບົດສະຫຼຸບ-ລາຍງານການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ; ພ້ອມນັ້ນ, ຍັງໄດ້ຮັບຟັງການສະເໜີບົດຈາກວິທະຍາກອນຈາກກະຊວງແຜນການກ່ຽວກັບການເກັບກຳສະຖິຕິພົນລະເມືອງລາວ ໂດຍຕິດພັນກັບຜູ້ມີສິດປ່ອນບັດເລືອກຕັ້ງ ແລະ ວິທະຍາກອນຈາກກະຊວງພາຍໃນ ໄດ້ສະເໜີກ່ຽວກັບການເຜີຍແຜ່ກົດໝາຍກ່ຽວກັບເອກະສານທາງລັດຖະການ ເຊິ່ງບັນດານັກສຳມະນາກອນໄດ້ຮ່ວມກັນຄົ້ນຄວ້າ ແລະ ສົນທະນາແລກປ່ຽນຢ່າງກົງໄປກົງມາ ຕໍ່ຫົວຂໍ້ທີ່ວິທະຍາກອນໄດ້ຍົກຂຶ້ນ ແລະ ບັນຫາອື່ນໆອີກຈຳນວນໜຶ່ງທີ່ມີຄວາມສົນໃຈ ເຮັດໃຫ້ກອງປະຊຸມຄັ້ງນີ້ມີຜົນສຳເລັດລົງດ້ວຍໝາກຜົນອັນຈົບງາມ.

(ນາງ ປາກາລັກ ພົມມີໄຊ)

## ປະທານ...

(ຕໍ່ຈາກໜ້າ 1)

ແຫ່ງຣາຊະອານາຈັກກຳປູເຈຍ; ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດອັນໃຫຍ່ຫຼວງຮອບດ້ານ ທີ່ປະຊາຊົນກຳປູເຈຍອ້າຍນ້ອງຍາດມາໄດ້ ໂດຍພາຍໃຕ້ການນຳພາອັນເດັດດ່ຽວໜຽວແໜ້ນຂອງພັກປະຊາຊົນ ແລະ ລັດຖະບານກຳປູເຈຍ, ພິເສດແມ່ນຜົນສຳເລັດຂອງການເລືອກຕັ້ງສະພາຕາແສງ ຊຸດທີ V ໃນປີ 2022 ຜ່ານມາ ເຊິ່ງພັກປະຊາຊົນກຳປູເຈຍ ໄດ້ຮັບໄຊຊະນະຢ່າງຖ້ວມລົ້ນ ກໍຄືຜົນສຳເລັດຂອງການເປັນປະທານກອງປະຊຸມສຸດຍອດອາຊຽນ ຄັ້ງທີ 40 ແລະ 41 ແລະ ກອງປະຊຸມສຸດຍອດທີ່ກ່ຽວຂ້ອງ ລວມທັງກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 43, ອັນເປັນການເຊີດຊູຖານະບົດບາດຂອງກຳປູເຈຍ ໃຫ້ສູງເດັ່ນຂຶ້ນ ໃນເວທີພາກພື້ນ ແລະ ສາກົນ; ພ້ອມທັງໄດ້ສະແດງຄວາມເຊື່ອໝັ້ນວ່າ ພາຍໃຕ້ການນຳພາຂອງສົມເດັດ ຮຸນແຊນ, ກຳປູເຈຍຈະໄດ້ຮັບຜົນສຳເລັດຢ່າງຈົບງາມ ໃນການເປັນເຈົ້າພາບຈັດງານກິລາຊີເກມ ໃນເດືອນພຶດສະພາ ແລະ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ VII ໃນເດືອນກໍລະກົດ 2023 ທີ່ຈະມາເຖິງນີ້.

ພ້ອມດຽວກັນນັ້ນ, ພະນະທ່ານປະທານສະພາແຫ່ງຊາດລາວ ກໍໄດ້ແຈ້ງຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ໃນເດືອນທັນວາ 2022 ຜ່ານມາ ທີ່ໄດ້ພິຈາລະນາ ແລະ ຮັບຮອງເອົາຫຼາຍບັນຫາທີ່ສຳຄັນຂອງຊາດ; ໄດ້ຕີລາຄາສູງຕໍ່ຜົນສຳເລັດຂອງການປຶກສາຫາລືຮ່ວມ ລະຫວ່າງສອງນາຍົກລັດຖະມົນຕີ ລາວ-ກຳປູເຈຍ ເຊິ່ງສາມາດຕົກລົງຫຼາຍບັນຫາຮ່ວມກັນ ເພື່ອສົ່ງເສີມການພົວພັນທີ່ດີ ແລະ ການຮ່ວມມືທີ່ເປັນໝາກຜົນໃຫ້ແກ່ສອງປະເທດ; ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ທີ່ສອງລັດຖະບານໄດ້ຮ່ວມກັນລົງນາມ ສົນທິສັນຍາ ວ່າດ້ວຍການປັກຫຼັກໝາຍຊາຍແດນທີ່ສຳເລັດການສຳຫຼວດຮ່ວມກັນແລ້ວ 86% ແລະ ແຜນປະຕິບັດງານຮ່ວມ ສຳລັບການພົວພັນແບບຄູ່ຮ່ວມຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ເຊິ່ງເປັນເອກະສານທີ່ມີຄວາມໝາຍສຳຄັນທາງດ້ານປະຫວັດສາດຂອງສອງປະເທດ. ໃນຕອນທ້າຍ, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຕາງໜ້າໃຫ້ສະພາແຫ່ງຊາດ, ລັດຖະບານ ແລະ ປະຊາຊົນລາວບັນດາເຜົ່າ ສະແດງຄວາມຂອບໃຈຢ່າງຈິງໃຈມາຍັງພັກປະຊາຊົນກຳປູເຈຍ, ລັດຖະບານ, ລັດຖະສະພາ ແລະ ປະຊາຊົນກຳປູເຈຍ ທີ່ໄດ້ໃຫ້ການຮ່ວມມື, ສະໜັບສະໜູນ ແລະ ຊ່ວຍເຫຼືອຢ່າງໃຫຍ່ຫຼວງ ແກ່ພັກ, ລັດຖະບານ, ສະພາແຫ່ງຊາດ ກໍຄື ປະຊາຊົນລາວບັນດາເຜົ່າ ຕະຫຼອດໄລຍະທີ່ຜ່ານມາ.

ໃນການພົບປະຄັ້ງນີ້, ສອງຝ່າຍ ໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ການພົວພັນແບບຄູ່ຮ່ວມຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງສອງປະເທດ ລາວ-ກຳປູເຈຍ ທີ່ນັບມື້ນັບໄດ້ຮັບການເສີມຂະຫຍາຍເຂົ້າສູ່ລວງເລິກ ເວົ້າລວມ, ເວົ້າສະເພາະ ການພົວພັນຮ່ວມມື ລະຫວ່າງ ສະພາແຫ່ງຊາດລາວ ແລະ ລັດຖະສະພາກຳປູເຈຍ ທີ່ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ໂດຍໄດ້ມີການແລກປ່ຽນຄະນະຜູ້ແທນ, ແລກປ່ຽນຂໍ້ມູນຂ່າວສານ, ຊຸກຍູ້ການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງຂອງສອງປະເທດ, ພ້ອມທັງມີການຮ່ວມມື ແລະ ສະໜັບສະໜູນ ເຊິ່ງກັນແລະກັນ ໃນເວທີລັດຖະສະພາ ພາກພື້ນ ແລະ ສາກົນ.

ໃນຂະນະດຽວກັນ, ສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນ ແຊນ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ໄດ້ແຈ້ງສະພາບການພົ້ນເດັ່ນຂອງການພັດທະນາເສດຖະກິດ-ສັງຄົມຂອງກຳປູເຈຍໂດຍຫຍໍ້, ພ້ອມທັງໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການຮ່ວມມືທີ່ມີມາແຕ່ດົນນານຖານບ້ານໃກ້ເຮືອນຄຽງ ແລະ ການພົວພັນແບບຄູ່ຮ່ວມຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງ ສອງປະເທດ ລາວ-ກຳປູເຈຍ ທີ່ໄດ້ຮັບການເສີມຂະຫຍາຍເປັນກ້າວໆຕະຫຼອດມາ. ພ້ອມດຽວກັນນີ້, ສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນ ແຊນ ກໍໄດ້ສະແດງຄວາມໝາຍໝັ້ນວ່າ ຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອ ສປປລາວ ໃນຕໍ່ໜ້າ ໂດຍສະເພາະແມ່ນການເປັນເຈົ້າພາບຈັດກອງປະຊຸມສຸດຍອດລັດຖະສະພາ 3 ປະເທດ ກຳປູເຈຍ-ລາວ-ຫວຽດນາມ ໃນທ້າຍປີ 2023, ກອງປະຊຸມສຸດຍອດອາຊຽນ ແລະ ກອງປະຊຸມ AIPA ໃນປີ 2024. ພ້ອມນັ້ນ, ສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນ ແຊນ ຍັງໄດ້ແຈ້ງໃຫ້ຊາບກ່ຽວກັບການກະກຽມເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ VII ທີ່ຈະຈັດຂຶ້ນໃນເດືອນກໍລະກົດ 2023 ທີ່ຈະມາເຖິງນີ້ ແລະ ພາຍຫຼັງການເລືອກຕັ້ງ 60 ວັນ ສະພາແຫ່ງຊາດຊຸດເກົ່າ ຈະໝົດວາລະ.

ໃນວັນດຽວກັນ, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ກໍໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງພະນະທ່ານ ເຕບ ໂງ່ ຮອງປະທານສະພາສູງ (ຜູ້ທີ 2) ແຫ່ງຣາຊະອານາຈັກ ກຳປູເຈຍ.

(ກົມການຂ່າວ, ກະຊວງການຕ່າງປະເທດ)

## ປຶກສາຫາລື...

(ຕໍ່ຈາກໜ້າ 1)

ພັກ, ຮອງປະທານສະພາແຫ່ງຊາດ; ມີຄະນະເລຂາທິການສະພາແຫ່ງຊາດ, ບັນດາທ່ານຄະນະຮັບຜິດຊອບວຽກງານຍົກສູງຂີດຄວາມສາມາດໃຫ້ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານທີ່ເປັນເສນາທິການ ແລະ ບັນດາທ່ານຄະນະສະຖາບັນຄົ້ນຄວ້ານິຕິກຳ, ຄະນະກົມ ແລະ ຄະນະສູນ ພ້ອມດ້ວຍພະນັກງານ-ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ເພື່ອສ້າງຄວາມເປັນເອກະພາບກັນພາຍໃນຄະນະຊີ້ນຳລວມການຍົກສູງຂີດຄວາມສາມາດ ໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການກ່ຽວກັບການວາງແຜນ, ການຄັດເລືອກບຸກຄະລາກອນ ເພື່ອສ້າງເປັນວິທະຍາກອນຂອງສະພາແຫ່ງຊາດ ໃຫ້ມີຄວາມຮັບປະກັນດ້ານປະລິມານ ແລະ ຄຸນນະພາບ; ເພື່ອເຮັດໃຫ້ວຽກງານຍົກສູງຂີດຄວາມສາດໃຫ້ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການ ຂອງບັນດາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດໄດ້ຮັບການຈັດຕັ້ງປະຕິບັດຕາມທິດທາງແຜນການ, ສອດຄ່ອງກັບໜ້າທີ່ການເມືອງ, ມີປະສິດທິພາບ ແລະ ປະສິດທິຜົນ;ເພື່ອເຮັດໃຫ້ບັນດາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດມີທີມງານວິທະຍາກອນເປັນຂອງຕົນເອງ ທີ່ມີຄວາມເຂັ້ມແຂງ ແລະ ສາມາດຝຶກອົບຮົມຫົວຂໍ້ທັກສະຕ່າງໆ ໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການສະພາແຫ່ງຊາດ.

ກອງປະຊຸມ, ໄດ້ຮັບຟັງການສະເໜີຮ່າງແຜນການສ້າງ ແລະ ພັດທະນາວິທະຍາກອນ ໃນໄລຍະ 2023-2025 ຈາກທ່ານ ສາຍອູ ພູມມສາລີ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ; ຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມ ແລະ ບັນດາຜູ້ເຂົ້າຮ່ວມກໍໄດ້ປະກອບຄຳຄິດຄຳເຫັນຕໍ່ການສະເໜີດັ່ງກ່າວຢ່າງສ້າງສັນ ແລະ ກົງໄປກົງມາ.

ໃນຕອນທ້າຍ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນກ່າວປິດກອງປະຊຸມວ່າ: ກອງປະຊຸມປຶກສາຫາລືການສ້າງ ແລະ ພັດທະນາວິທະຍາກອນ ຂອງສະພາແຫ່ງຊາດ ໄດ້ສຳເລັດຕາມຄາດໝາຍທີ່ວາງໄວ້ ເຊິ່ງກອງປະຊຸມ ໄດ້ສຸມໃສ່ຄົ້ນຄວ້າ ແລະ ປະກອບຄຳເຫັນຢ່າງກົງໄປກົງມາ ເປັນປະໂຫຍດ ແລະ ມີຄວາມເຫັນດີເປັນເອກະພາບໂດຍພື້ນຖານຕໍ່ແຜນການສ້າງ ແລະ ພັດທະນາວິທະຍາກອນຂອງສະພາແຫ່ງຊາດ ເຊິ່ງໄດ້ສຸມໃສ່ການກຳນົດເອົາເປົ້າໝາຍສ້າງເປັນວິທະຍາກອນແຕ່ລະປະເພດ ເພື່ອສືບຕໍ່ດຳເນີນການຝຶກອົບຮົມຂີດຄວາມສາມາດໃຫ້ແກ່ບັນດາວິທະຍາກອນຂອງກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນໄລຍະຕໍ່ໜ້ານີ້ໃຫ້ມີປະສິດທິຜົນດີ; ພ້ອມນັ້ນ, ທ່ານຍັງໄດ້ສະແດງຄວາມຊົມເຊີຍຕໍ່ສະຖາບັນຄົ້ນຄວ້ານິຕິກຳທີ່ເປັນໃຈກາງໃນການກະກຽມເນື້ອໃນ ໃຫ້ແກ່ການດຳເນີນກອງປະຊຸມຄັ້ງນີ້ ແລະ ຕີລາຄາສູງຕໍ່ຄວາມຮັບຜິດຊອບ ແລະ ຄວາມເອົາໃຈໃສ່ຂອງບັນດາທ່ານຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ທີ່ໄດ້ຕັ້ງໜ້າປະກອບຄຳຄິດຄຳເຫັນດ້ວຍຄວາມຈິງໃຈ ແລະ ກົງໄປກົງມາຕໍ່ເນື້ອໃນຂອງກອງປະຊຸມ ເຮັດໃຫ້ກອງປະຊຸມສຳເລັດຕາມຄາດໝາຍທີ່ວາງໄວ້.

(ນາງ ສຸພາວັນ ທອມສະນິດ)

# ຜົນສຳເລັດການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023

ຕໍ່ຈາກສະບັບກ່ອນ...

4.3 ຄະນະປະຈຳສະພາແຫ່ງຊາດ ເອົາໃຈໃສ່ຊີ້ນຳ-ນຳພາວຽກງານການສ້າງຄວາມເຂັ້ມແຂງ ດ້ວຍການຈັດກອງປະຊຸມຝຶກອົບຮົມສຳມະນາຫົວຂໍ້ຕ່າງໆ ໄດ້ຈຳນວນ 54 ຄັ້ງ. ໃນນີ້, ໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຈຳນວນ 8 ຄັ້ງ ມີຫົວຂໍ້ຈຳນວນໜຶ່ງ ເຊັ່ນ: 1) ການປະຕິບັດພາລະບົດບາດຂອງສະພາ ແລະ ສະມາຊິກສະພາ; 2) ທັກສະການສ້າງນິຕິກຳ ແລະ ການແກ້ໄຂຄຳຮ້ອງຂໍຄວາມເປັນທຳ; 3) ທັກສະການຊັກຖາມ, ການປະກອບຄຳເຫັນຢູ່ກອງປະຊຸມສະພາ, ການລົງພົບປະຜູ້ມີສິດເລືອກຕັ້ງ ແລະ ການຕິດຕາມກວດກາ; 4) ການເຄື່ອນໄຫວວຽກງານ ລະຫວ່າງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ; 5) ການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ; 6) ການຕິດຕາມກວດກາງົບປະມານ ກ່ຽວກັບການພັດທະນາວຽກງານແມ່ຍິງ ແລະ ເດັກນ້ອຍ; 7) ການປະຕິບັດນະໂຍບາຍ ແລະ ການລົງທຶນ ເຂົ້າໃນລະບົບປົກປ້ອງສັງຄົມ; 8) ການປົກປ້ອງສົ່ງເສີມວຽກງານດ້ານສິດທິມະນຸດ ແລະ ວຽກງານການຕ່າງປະເທດ ເຊິ່ງມີຜູ້ເຂົ້າຮ່ວມ 338 ທ່ານ, ຍິງ 106 ທ່ານ; ຈັດຝຶກອົບຮົມໃນຫົວຂໍ້ຕ່າງໆ ໃຫ້ແກ່ພະນັກງານ-ລັດຖະກອນ ທັງສູນກາງ ແລະ ທ້ອງຖິ່ນ ໄດ້ຈຳນວນ 46 ຄັ້ງ. ນອກນັ້ນ, ຍັງໄດ້ຊີ້ນຳບັນດາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ດຳເນີນກອງປະຊຸມຄົບຄະນະ ແລະ ກອງປະຊຸມປະຈຳປີ ສຳເລັດໂດຍພື້ນຖານ ເພື່ອສະຫຼຸບຕີລາຄາການເຄື່ອນໄຫວວຽກງານຂອງຕົນ ແລະ ເປັນຂໍ້ມູນສະໜອງໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ສະພາແຫ່ງຊາດ ຊຸດທີ IX;

4.4 ເອົາໃຈໃສ່ຊີ້ນຳ-ນຳພາການສ້າງ ແລະ ປັບປຸງບັນດານິຕິກຳໃຕ້ກົດໝາຍ ໃນຂົງເຂດວຽກງານຂອງສະພາແຫ່ງຊາດ ໄດ້ທັງໝົດຈຳນວນ 53 ສະບັບ ໃນນີ້, ນິຕິກຳວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະປະຈຳສະພາແຫ່ງຊາດ ແລະ ບັນດາກົງຈັກການຈັດຕັ້ງສະພາແຫ່ງຊາດ ຈຳນວນ 30 ສະບັບ; ນິຕິກຳການປະສານງານ ກັບພາກສ່ວນຕ່າງໆ ແລະ ນິຕິກຳການຮັບໃຊ້ວຽກງານລວມຂອງສະພາແຫ່ງຊາດ ຈຳນວນ 23 ສະບັບ.

5. ດ້ານການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ

1.1 ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໄດ້ດຳເນີນກອງປະຊຸມ ປະຈຳປີຂອງຕົນ ເພື່ອຕີລາຄາການເຄື່ອນໄຫວວຽກງານ ປີ 2021 ແລະ ກຳນົດແຜນການ ປີ 2022; ປະສານສົມທົບກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ ກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ແລະ ເທື່ອທີ 3 ຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ II ເຊິ່ງໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນຂອງທ້ອງຖິ່ນ ຕາມທີ່ກົດໝາຍໄດ້ກຳນົດ; ເປັນເຈົ້າການປະກອບຄຳເຫັນໃນນາມຕາງໜ້າຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ຢູ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ແລະ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;

1.2 ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໄດ້ເອົາໃຈໃສ່ຕິດຕາມ, ຄຸ້ມຄອງສະມາຊິກສະພາແຫ່ງຊາດ ໃນການເຄື່ອນໄຫວປະຕິບັດສິດ ແລະ ໜ້າທີ່ຂອງຕົນ ເປັນຕົ້ນ ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງຜ່ານມາ ສະມາຊິກສະພາແຫ່ງຊາດ ມີຄວາມໜັກແໜ້ນທາງດ້ານຄຸນທາດການເມືອງ, ຍົກສູງສະຕິຕໍ່ການຈັດຕັ້ງ, ຕັ້ງໜ້າປະຕິບັດໜ້າທີ່ເປັນຕົວແທນແກ່ປະຊາຊົນບັນດາເຜົ່າ ສະແດງອອກການປະກອບຄຳເຫັນ, ຊັກຖາມດ້ວຍຄວາມຮັບຜິດຊອບ, ການໃຫ້ຄະແນນຕໍ່ບຸກຄະລາກອນທີ່ມາລາຍງານ, ຊີ້ແຈງຕໍ່ກອງປະຊຸມ ແລະ ລົງຄະແນນສຽງຮັບຮອງເອົາເນື້ອໃນຕ່າງໆຂອງກອງປະຊຸມ; ເກັບກຳສະຖິຕິ (ການເລື່ອນຊັ້ນ, ຂັ້ນ, ຕຳແໜ່ງ), ຂຽນຜົນງານການເຄື່ອນໄຫວ ແລະ ຂຽນຊີວະປະຫວັດ ຂອງສະມາຊິກສະພາແຫ່ງຊາດ. ພ້ອມດຽວກັນນີ້, ຍັງໄດ້ປະສານສົມທົບກັບສະມາຊິກສະພາປະຊາຊົນຂັ້ນແຂວງໃນການລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ແລະ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ທັງໝົດ 2.029 ຈຸດ, ມີຜູ້ເຂົ້າຮ່ວມ 212.951 ເທື່ອຄົນ, ຍິງ 88.505 ເທື່ອຄົນ; ລະດົມທຶນຊ່ວຍເຫຼືອປະຊາຊົນຈາກພາຍໃນ ແລະ ຕ່າງປະເທດ ເປັນເງິນ-ວັດຖຸ ລວມມູນຄ່າທັງໝົດ 2.067.913.756 ກີບ;

1.3 ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໃນຖານະທີ່ເປັນກົງຈັກຂອງຄະນະປະຈຳສະພາແຫ່ງຊາດ ທີ່ປະຕິບັດວຽກງານຂອງສະພາແຫ່ງຊາດ ຢູ່ເຂດເລືອກຕັ້ງ ກໍໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານດ້ວຍຄວາມຮັບຜິດຊອບສູງ ເຊັ່ນ: ການນຳເອົາຮ່າງກົດໝາຍ ລົງໄປທາບທາມປະຊາຊົນ, ສະຫຼຸບ-ສັງລວມ, ລາຍງານຄະນະປະຈຳສະພາແຫ່ງຊາດ; ສົມທົບກັບສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າພິຈາລະນາ, ຮັບຮອງເອົານິຕິກຳທີ່ສຳຄັນຂອງທ້ອງຖິ່ນ ໄດ້ທັງໝົດ 38 ສະບັບ, ໃນນີ້ ສ້າງໃໝ່ 28 ສະບັບ ແລະ ປັບປຸງ 10 ສະບັບ; ການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ສະແດງອອກການເຂົ້າຮ່ວມພິຈາລະນາຮັບຮອງເອົາບັນຫາສຳຄັນຂອງທ້ອງຖິ່ນ ຢູ່ກອງປະຊຸມສະ ໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ II ແລະ ກອງປະຊຸມປະຈຳເດືອນ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ. ນອກຈາກການຕິດຕາມກວດກາໃນກອງປະຊຸມສະພາປະຊາຊົນຂັ້ນແຂວງແລ້ວ ຍັງໄດ້ຕິດຕາມຮ່ວມກັບຄະນະສະເພາະກິດຕ່າງໆ ຂອງສະພາແຫ່ງຊາດ; ການເກັບກຳຄຳຄິດເຫັນຂອງປະຊາຊົນລາວບັນດາເຜົ່າ ເພື່ອສະເໜີໃຫ້ບັນດາພະ

ອ່ານຕໍ່ສະບັບໜ້າ...



## ຮອງປະທານ...

(ຕໍ່ຈາກໜ້າ 1)

ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ພ້ອມດ້ວຍບັນດາສະມາຊິກສະພາປະຊາຊົນແຂວງ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ຢູ່ 2 ຈຸດ ຄື: ຫໍປະຊຸມໃຫຍ່ບ້ານໃຫຍ່ເມືອງປາ ເມືອງປາກລາຍ ແລະ ກອງພັນໃຫຍ່ 202 ແຂວງໄຊຍະບູລີ.

ໂອກາດດັ່ງກ່າວ, ສະມາຊິກສະພາແຫ່ງຊາດ ໄດ້ຜັດປ່ຽນກັນເຜີຍແຜ່ຜົນຂອງກອງປະຊຸມ ເຊິ່ງປະກອບມີບັນດາມະຕິ, ກົດໝາຍ ແລະ ບັນດາເນື້ອໃນເອກະສານບົດລາຍງານຕ່າງໆ ທີ່ນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ໄຊຍະບູລີ ຊຸດທີ II; ພ້ອມນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ກໍໄດ້ມີການແລກປ່ຽນຄຳຄິດຄຳເຫັນ ແລະ ຮັບຄຳສະເໜີຈາກຜູ້ມີສິດເລືອກຕັ້ງ; ຈາກນັ້ນ, ສະມາຊິກສະພາແຫ່ງຊາດ ຍັງໄດ້ລົງຕິດຕາມກວດກາໂຄງການເຂື່ອນໄຟຟ້າພະລັງງານນ້ຳ ທີ່ເມືອງປາກລາຍ.

ໃນໂອກາດນີ້, ສະມາຊິກສະພາແຫ່ງຊາດ ຍັງໄດ້ນຳເອົາເຄື່ອງຈຳນວນໜຶ່ງ ລວມເປັນມູນຄ່າ 3 ລ້ານກີບ ມອບໃຫ້ກອງພັນໃຫຍ່202ຕື່ມອີກ.

(ນາງ ກຸກກິກ ບຸດດາໄຊ)

## ຍົກສູງ...

(ຕໍ່ຈາກໜ້າ 1)

ພະແນກ, ວິຊາການຈາກກົມພົວພັນລັດຖະສະພາສອງຝ່າຍ ແລະ ກົມພົວພັນລັດຖະສະພາຫຼາຍຝ່າຍ, ກົມກ່ຽວຂ້ອງຂອງຄະນະເລຂາທິການສະພາແຫ່ງຊາດ ແລະ ຜູ້ຮັບຜິດຊອບວຽກງານການຕ່າງປະເທດ ທີ່ມາຈາກ ສພຂ ຈາກ 18 ແຂວງ ມີຈຳນວນທັງໝົດ 52 ທ່ານ, ຍິງ 24 ທ່ານ.

ທັງນີ້, ເພື່ອສ້າງຄວາມເຂັ້ມແຂງ ແລະ ຍົກສູງຂີດຄວາມສາມາດ ໃຫ້ພະນັກງານວິຊາການ ພາຍໃນສະພາແຫ່ງຊາດ ກໍຄື ສພຊ ໃນຂອບເຂດທົ່ວປະເທດ ຕາມແຜນການ 5 ປີ ແລະ ແຜນການປະຈຳປີ ຂອງກຳມາທິການການຕ່າງປະເທດ ໃນການບຳລຸງສ້າງພະນັກງານລັດຖະກອນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມ ຍັງໄດ້ຮຽນຮູ້ ແລະ ເຊື່ອມຊຶມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ, ກຳມາທິການການຕ່າງປະເທດ ກໍຄື ບັນດາກົມ ທີ່ເປັນເສນາທິການໃຫ້ກຳມາທິການການຕ່າງປະເທດ ແລະ ສະພາປະຊາຊົນແຂວງ, ນະໂຍບາຍການຕ່າງປະເທດ ຂອງພັກ-ລັດ ແລະ ການພົວພັນຮ່ວມມື ລະຫວ່າງ ສປປລາວ ກັບບັນດາປະເທດເພື່ອນມິດຍຸດທະສາດ, ເພື່ອນມິດ ແລະ ປະເທດບ້ານໃກ້ເຮືອນຄຽງ, ການສະຫຼຸບຕີລາຄາການເຄື່ອນໄຫວວຽກງານການຕ່າງປະເທດ ຂອງສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ການກະກຽມດ້ານເນື້ອໃນການເຄື່ອນໄຫວວຽກຕ່າງປະເທດໃນກອບສອງຝ່າຍ, ທິດສະດີ, ຫຼັກການ ແລະ ວິທີການແປເອກະສານທາງການໃຫ້ແກ່ການນຳ, ການແນະນຳກ່ຽວກັບການປະສານງານ, ການເຜີຍແຜ່ເອກະສານທາງການຂອງກຳມາທິການການຕ່າງປະເທດ, ການນຳໃຊ້ລະບົບການຄຸ້ມຄອງເອກະສານແບບທັນສະໄໝ (E-office), ການກະກຽມເນື້ອໃນໃຫ້ແກ່ຄະນະຜູ້ແທນລະດັບຕ່າງໆໃນການເຂົ້າຮ່ວມກອງປະຊຸມລັດຖະສະພາພາກພື້ນ ແລະ ສາກົນ, ການກະກຽມເປັນເຈົ້າພາບຈັດກອງປະຊຸມສາກົນຕ່າງໆເປັນຕົ້ນ CLV, AIPA ແລະ ອື່ນໆ, ການສ້າງແຜນການຕິດຕາມກວດກາຂອງກຳມາທິການການຕ່າງປະເທດ ແລະ ຂັ້ນຕອນການຄົ້ນຄວ້າໃຫ້ສັດຕະຍາບັນແກ່ສົນທິສັນຍາສາກົນ ຂອງສະພາແຫ່ງຊາດ ແລະ ວຽກງານດ້ານພິທີການທູດ.

ພາຍຫຼັງໄດ້ຮັບຟັງການນຳສະເໜີບົດຮຽນ ຈາກວິທະຍາກອນທີ່ມີຄວາມຮູ້ຄວາມສາມາດ ແລະ ມີປະສົບການຕົວຈິງມາຫລາຍປີ ໃນການຄົ້ນຄວ້າ, ວິໄຈ, ສັງລວມ ແລະ ຂຽນບົດແລ້ວ ຜູ້ເຂົ້າຮ່ວມກອງປະຊຸມ ຍັງໄດ້ລົງເລິກສົນທະນາ, ປຶກສາຫາລື, ແລກປ່ຽນບົດຮຽນ ແລະ ຝຶກຫັດເຮັດຕົວຈິງນຳກັນ ໃນບາງຫົວຂໍ້ ແລະ ເນື້ອໃນທີ່ມີຄວາມສຳຄັນ ເພື່ອນຳໄປໝູນໃຊ້ເຂົ້າໃນການຄົ້ນຄວ້າ, ການສັງລວມ, ການຂຽນເອກະສານສຳຄັນຕ່າງໆ ໃຫ້ມີປະສິດທິພາບ ປະສິດທິຜົນສູງ, ສາມາດຕອບສະໜອງໃຫ້ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານຕົວຈິງໃນໄລຍະໃໝ່ ຂອງກຳມາທິການການຕ່າງປະເທດ ກໍຄື ສະພາແຫ່ງຊາດ ແລະ ກົງຈັກການຈັດຕັ້ງຂອງສະພາປະຊາຊົນຂັ້ນແຂວງ.

ໃນຕອນທ້າຍຂອງກອງປະຊຸມ, ບັນດານັກສຳມະນາກອນ ຍັງໄດ້ຮັບໃບຢັ້ງຢືນການເຂົ້າຮ່ວມກອງປະຊຸມຝຶກອົບຮົມໃນຄັ້ງນີ້ຕື່ມອີກ.

# ຮອງປະທານກຳມາທິການແຜນການ ການເງິນ ແລະ ກວດສອບ ຕ້ອນຮັບຮອງຜູ້ອຳນວຍການໃຫຍ່ IMF



(ສພຊ) ໃນວັນທີ 8 ກຸມພາ 2023 ທີ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ, ທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ Kenji Okamura ຮອງຜູ້ອຳນວຍການໃຫຍ່ກອງທຶນການເງິນສາກົນ (IMF) ພ້ອມດ້ວຍຄະນະ.

ໃນໂອກາດນີ້, ທ່ານ ທັນຕາ ກອງຜາລີ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະ ຊົມເຊີຍ ທ່ານ Kenji Okamura ພ້ອມດ້ວຍຄະນະ ທີ່ເດີນທາງມາເຮັດວຽກຮ່ວມກັບພາກສ່ວນກ່ຽວຂ້ອງ ຂອງ ສປປລາວ ໃນການປະເມີນເສດຖະກິດມະຫາພາກ ຂອງ ສປປລາວ ປະຈຳປີ 2022 ຕາມພັນທະປະເທດສະມາຊິກພາຍໃຕ້ມາດຕາ (Article IV Consultation) ເຊິ່ງການປະເມີນດັ່ງກ່າວ ແມ່ນມີຄວາມສຳຄັນ ສຳລັບ ສປປລາວ ໂດຍສະເພາະໃນໄລຍະມີຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ກຳລັງປະເຊີນກັບສິ່ງທ້າທາຍຫຼາຍຢ່າງ ຈາກປັດໄຈພາຍໃນ ແລະ ພາຍນອກ ຜົນການປະເມີນຈະເປັນຂໍ້ມູນທີ່ສຳຄັນໃຫ້ແກ່ການຈັດລຳດັບຄວາມໜ້າເຊື່ອຖື ຂອງ ສປປລາວ ໃນການຍາດແຍ່ງການຊ່ວຍເຫຼືອຈາກສາກົນ ແລະ ດຶງດູດການລົງທຶນຂອງຕ່າງປະເທດ ເຊິ່ງນັກລົງທຶນ, ຄູ່ຮ່ວມພັດທະນາ ແລະ ບໍລິສັດຂອງຕ່າງປະເທດ ກຳລັງລໍຖ້າຜົນການປະເມີນສະພາບເສດຖະກິດມະຫາພາກ ຂອງ ສປປ ລາວ ໃນປີນີ້; ພ້ອມດຽວກັນນັ້ນ, ທ່ານ ທັນຕາ ກອງຜາລີ ຍັງໄດ້ສະເໜີໃຫ້ກອງທຶນການເງິນສາກົນສືບຕໍ່ໃຫ້ການສະໜັບສະໜູນຊ່ວຍເຫຼືອທາງດ້ານວິຊາການໃຫ້ແກ່ພາກສ່ວນກ່ຽວຂ້ອງ ຂອງ ສປປ ລາວ ເພື່ອໃຫ້ສາມາດຮັບມືກັບບັນດາຄວາມສ່ຽງທີ່ ສປປລາວ ກຳລັງປະເຊີນຢ່າງມີປະສິດທິພາບ ແລະ ທັນສະພາບການ.

ໃນໂອກາດດຽວກັນນີ້, ທ່ານຮອງຜູ້ອຳນວຍການໃຫຍ່ກອງທຶນການເງິນສາກົນ (IMF) ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ໄດ້ລາຍງານຜົນການປະເມີນເສດຖະກິດ ສປປລາວ. ໃນນັ້ນ, ໄດ້ເນັ້ນບັນຫາສຳຄັນ ຄື: ການພັດທະນາເສດຖະກິດ, ການເງິນພາກລັດ, ນະໂຍບາຍເງິນຕາ ແລະ ການທະນາຄານ, ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ແລະ ການຄາດຄະເນໃນຕໍ່ໜ້າ ເຊິ່ງຜົນຂອງການປະເມີນ ເຫັນວ່າຍັງມີສິ່ງທ້າທາຍ ແລະ ຄວາມອ່ອນໄຫວຂອງເສດຖະກິດໃນຫຼາຍດ້ານ ທີ່ສົ່ງຜົນກະທົບຕໍ່ການຂະຫຍາຍຕົວ ແລະ ສະຖຽນລະພາບຂອງເສດຖະກິດສປປລາວ. ແຕ່ເຖິງຢ່າງໃດກໍຕາມ IMF ຄາດວ່າໃນຕໍ່ໜ້າ ເສດຖະກິດ ຂອງ ສປປລາວ ຈະຟື້ນຕົວເຂົ້າສູ່ສະພາບປົກກະຕິ ແລະ ເຕີບໂຕຢ່າງຕໍ່ເນື່ອງ.

ການປະເມີນເສດຖະກິດມະຫາພາກ ຕາມມາດຕາ IV ຂອງ IMF ແມ່ນການປະຕິບັດພັນທະ ຂອງ ສປປລາວ ໃນນາມປະເທດສະມາຊິກ ເພື່ອໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກແກ່ຄະນະວິຊາການຂອງ IMF ໃນການຕິດຕາມ ແລະ ປະເມີນຄວາມຄືບໜ້າການພັດທະນາເສດຖະກິດໃນທຸກໆປີ. ການປະເມີນໃນປີນີ້ ເຫັນວ່າ ພິເສດ ເພາະວ່າເປັນຄັ້ງທຳອິດທີ່ມີການນຳຂັ້ນຮອງຜູ້ອຳນວຍການໃຫຍ່ຂອງ IMF ເປັນຜູ້ນຳພາຄະນະມາປະເມີນເສດຖະກິດຂອງ ສປປ ລາວ ເຊິ່ງສະແດງໃຫ້ເຫັນເຖິງຄວາມເອົາໃຈໃສ່ຂອງ IMF ທີ່ມີຕໍ່ ສປປລາວ ແລະ ຖືເປັນບາດກ້າວທີ່ສຳຄັນຂອງການພົວພັນຮ່ວມມືຂອງສອງຝ່າຍ.

# ກອງປະຊຸມໂຄສະນາ ເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ



(ສພຊ) ໃນວັນທີ 10 ກຸມພາ 2023 ທີ່ສະພາແຫ່ງຊາດ ກົມຕິດຕາມກວດກາ ໂຄສະນາ ແລະ ຕີຄວາມໝາຍກົດໝາຍ ຂອງກຳມາທິການກົດໝາຍ ໄດ້ດຳເນີນກອງປະຊຸມໂຄສະນາເຜີຍແຜ່ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ພະນັກງານ-ລັດຖະກອນ ພາຍໃນສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ອຳໄພ ຈິດມານົບ ຮອງປະທານກຳມາທິການກົດໝາຍ, ມີບັນດາຄະນະກົມ, ຄະນະພະແນກ ພ້ອມດ້ວຍພະນັກງານ-ວິຊາການ ພາຍໃນສະພາແຫ່ງຊາດ, ພ້ອມນັ້ນ, ຍັງມີນັກສຶກສາຝຶກງານຈາກສະຖາບັນຍຸຕິທຳແຫ່ງຊາດເຂົ້າຮ່ວມ.

ທັງນີ້, ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບເນື້ອໃນຂອງ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງສະພາແຫ່ງຊາດ ໃຫ້ແກ່ລັດຖະກອນວິຊາການ ຂອງສະພາແຫ່ງຊາດ ກໍໄດ້ກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢ່າງເລິກເຊິ່ງ ແລະ ຈັດຕັ້ງປະຕິບັດຖືກຕ້ອງ, ສອດຄ່ອງ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ຈາກທ່ານ ພອນແກ້ວ ຕົ້ນວໍລະຈິດ ຫົວໜ້າກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ, ການເຜີຍແຜ່ກົດໝາຍວ່າດ້ວຍສະພາແຫ່ງຊາດ ຈາກທ່ານ ກໍຢາ ຍີ່ງກາຍ ຫົວໜ້າພະແນກໂຄສະນາລັດຖະທຳມະນູນ ແລະ ກົດໝາຍ, ທ່ານ ນາງ ອາພິສອນ ພົງສາ ຮອງຫົວໜ້າກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ ທີ່ໄດ້ເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕີຄວາມໝາຍ ແລະ ອະທິບາຍກົດໝາຍ ໂດຍທ່ານ ສົມຈິດ ດວງສະຫວັນ ຮອງຫົວໜ້າພະແນກຕີຄວາມໝາຍກົດໝາຍ ແລະ ສັງລວມ ແລະ ການເຜີຍແຜ່ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໂດຍທ່ານ ອຳໄພ ຈິດມານົບ ຮອງປະທານກຳມາທິການກົດໝາຍ, ຮັບຟັງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ, ທ່ານ ບຸນລົ້ນ ສໍລາດຈຳປາ ຫົວໜ້າພະແນກຕິດຕາມກວດກາການຈັດຕັ້ງປະຕິບັດນິຕິກຳ ໄດ້ເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມ ກວດກາການຜັນຂະຫຍາຍບາງມາດຕາຂອງກົດໝາຍທີ່ກຳນົດ ໃຫ້ອອກເປັນນິຕິກຳໃຕ້ກົດໝາຍ.

ໃນຕອນທ້າຍ, ທ່ານ ອຳໄພ ຈິດມານົບ ໄດ້ມີຄຳເຫັນກ່າວປິດກອງປະຊຸມວ່າ: ກອງປະຊຸມ ເຕັມໄປດ້ວຍບັນຍາກາດຟົດຟື້ນ ແລະ ມີເນື້ອໃນຄວາມໝາຍອັນເລິກເຊິ່ງ ເຫັນວ່າບັນດາທ່ານຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຮັບຟັງ ແລະ ປະກອບຄຳຄິດຄຳເຫັນແລກປ່ຽນບົດຮຽນ ເຮັດໃຫ້ກອງປະຊຸມຄັ້ງນີ້ ບັນລຸຜົນສຳເລັດຢ່າງຈົບງາມ ເຊິ່ງຜູ້ເຂົ້າຮ່ວມຈະໄດ້ນຳເອົາຜົນສຳເລັດດັ່ງກ່າວ ໄປຄົ້ນຄວ້າ, ຖອດຖອນບົດຮຽນ ເພື່ອຮັບປະກັນເຮັດໃຫ້ວຽກງານໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງກຳມາທິການກົດໝາຍ ນັບມື້ນັບດີຂຶ້ນ.

## ທ່ານ ປອ...

(ຕໍ່ຈາກໜ້າ 1)

ລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຂອງອົງການໄອຍະການປະຊາຊົນ ໂດຍການເປັນປະທານກອງປະຊຸມຂອງທ່ານ ໄຊຊະນະ ໂຄດພູທອນ ກຳມະການສູນກາງພັກ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ; ມີບັນດາທ່ານຮອງຫົວໜ້າ ອອປສ, ຫົວໜ້າອົງການໄອຍະການທະຫານຂັ້ນສູງ, ຄະນະນຳຫ້ອງການ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ, ອົງການໄອຍະການປະຊາຊົນ ພາກ, ແຂວງ, ນະຄອນຫຼວງວຽງຈັນ, ເຂດ ແລະ ພະນັກງານໄອຍະການປະຊາຊົນຂັ້ນ I ທົ່ວປະເທດ ເຂົ້າຮ່ວມ.

ໃນວາລະດັ່ງກ່າວ, ທ່ານ ໄຊຊະນະ ໂຄດພູທອນ ໄດ້ລາຍງານການດຳເນີນ ແລະ ຜົນສຳເລັດຂອງສອງກອງປະຊຸມ ໂດຍຍົກໃຫ້ເຫັນວ່າ ກອງປະຊຸມສະຫຼຸບວຽກງານຕິດຕາມກວດກາການດຳເນີນຄະດີອາຍາ ທົ່ວປະເທດຄັ້ງ I ແລະ ກອງປະຊຸມສະຫຼຸບການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຂອງອົງການໄອຍະກາປະຊາຊົນ ໄດ້ຈັດຂຶ້ນລະຫວ່າງວັນທີ 13-14 ກຸມພາ 2023; ພ້ອມນັ້ນ, ໃນວາລະກອງປະຊຸມຍັງໄດ້ມີພິທີມອບບັດພະນັກງານໄອຍະການປະຊາຊົນຂັ້ນ I ຄັ້ງທີ I ຕື່ມອີກ.

ກອງປະຊຸມຄັ້ງນີ້, ໄດ້ຜ່ານບົດສະຫຼຸບຕີລາຄາວຽກງານຕິດຕາມກວດກາການດຳເນີນຄະດີອາຍາ ຂອງອົງການໄອຍະການປະຊາຊົນຕະຫຼອດໄລຍະ 33 ປີຜ່ານມາ; ສະຫຼຸບການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຂອງອົງການໄອຍະການປະຊາຊົນ ພ້ອມທັງໄດ້ພ້ອມກັນສະຫຼຸບຕີລາຄາຄືນຜົນສຳເລັດ, ຂໍ້ຄົງຄ້າງ, ບັນຫາຕັ້ງຂຶ້ນ, ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງວຽກງານຈຸດສຸມໃນຕໍ່ໜ້າ.

ໃນໂອກາດນີ້, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການດຳເນີນຄະດີອາຍາ ແລະ ການປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຜ່ານມາ; ພ້ອມນັ້ນ, ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວໄດ້ຮັບໝາກຜົນສູງສຸດຕາມຄາດໝາຍທີ່ວາງໄວ້ ໂດຍໄດ້ເນັ້ນໃຫ້ທິດທາງໃນຕໍ່ໜ້າອົງການໄອຍະການປະຊາຊົນຈະຕ້ອງສຸມໃສ່ວຽກງານຈຳນວນໜຶ່ງ ເປັນຕົ້ນ: ໜຶ່ງ, ວຽກງານປັບປຸງກົງຈັກການຈັດຕັ້ງ ແລະ ກໍ່ສ້າງພັກ-ພະນັກງານ ເອົາໃຈໃສ່ຕື່ມໃນການສຶກສາອົບຮົມການເມືອງ-ແນວຄິດ, ຄຸນທາດການເມືອງ, ເອົາໃຈໃສ່ກໍ່ສ້າງພະນັກງານໄອຍະການປະຊາຊົນ ຕິດພັນກັບການສ້າງຂະບວນການວຽກດີຄົນເດັ່ນຕາມຄຳຂວັນ 3 ມີ 4 ຮັບປະກັນ ແລະ ຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ພະນັກງານ-ລັດຖະກອນ; ສອງ, ເພີ່ມທະວີການຕິດຕາມກວດກາການປະຕິບັດກົດໝາຍ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ໂດຍຜັນຂະຫຍາຍເນື້ອໃນມະຕິ ສະບັບເລກທີ 037/ຄບສພ ວ່າດ້ວຍການຍົກສູງປະສິດທິພາບຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ແລະ ມະຕິສະບັບເລກທີ 112 ຂອງກົມການເມືອງສູນກາງພັກວ່າດ້ວຍການຍົກສູງຄຸນນະພາບການດຳເນີນຄະດີຕາມຂະບວນການຍຸຕິທຳ, ປະຕິບັດການໂຕ້ຖຽງ, ໂຕ້ແຍ່ງໃນທີ່ປະຊຸມສານຢ່າງມີປະສິດທິຜົນ; ສາມ, ສືບຕໍ່ສ້າງກົນໄກປະສານງານ ລະຫວ່າງ ອົງການໄອຍະການປະຊາຊົນ, ອົງການສືບສວນ-ສອບສວນ ແລະ ສານປະຊາຊົນ ຂັ້ນທ້ອງຖິ່ນໃນຂອບເຂດທົ່ວປະເທດໃຫ້ສຳເລັດ; ສີ່, ສືບຕໍ່ຈັດຕັ້ງຜັນຂະຫຍາຍ ຄຳສັ່ງຂອງກົມການເມືອງສູນກາງພັກ ສະບັບເລກທີ 02/ກມສພ, ມະຕິສະບັບເລກທີ 04/ສພຊ ຂອງສະພາແຫ່ງຊາດ, ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 19/ນຍ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ໃຫ້ຮັບປະກັນ 3 ຫຼັກການຕົ້ນຕໍ ຂອງການຈັດຕັ້ງປະຕິບັດວາລະແຫ່ງຊາດ ຄື: ຄວາມເດັດຂາດ, ຄວາມໂປ່ງໃສ ແລະ ຄວາມເປັນມືອາຊີບ; ຫ້າ, ຕັ້ງໜ້າປະຕິບັດແນວທາງການຕ່າງປະເທດຂອງພັກ ແລະ ລັດ ຢ່າງເປັນເຈົ້າການ ແລະ ມີຜົນສຳເລັດຕົວຈິງ ໂດຍຮັບປະກັນຕ່າງຝ່າຍຕ່າງມີຜົນປະໂຫຍດຮ່ວມກັນ, ເປີດກວ້າງການພົວພັນຮ່ວມມືກັບປະເທດອື່ນໆ ກໍຄື ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງບົດຮຽນ, ເຕັກນິກ, ເຕັກໂນໂລຊີ ແລະ ທຶນຮອນ ມາພັດທະນາວຽກງານໄອຍະການໃຫ້ກ້າວໜ້າ ແລະ ທັນສະໄໝ; ຫົກ, ສືບຕໍ່ປັບປຸງແບບແຜນ ແລະ ວິທີການນຳພາຂອງພັກຕໍ່ວຽກງານໄອຍະການ ໃນນີ້ໃຫ້ລົງເລິກປັບປຸງຮາກຖານການເມືອງ ຢູ່ໃນແຕ່ລະໜ່ວຍພັກ, ຢູ່ໃນແຕ່ລະກົມກອງຂອງອົງການໄອຍະການປະຊາຊົນ, ຄົ້ນຄວ້າມາດຕະການສະກັດກັ້ນຕໍ່ເປົ້າໝາຍທີ່ມີພຶດຕິກຳລະເມີດກົດໝາຍ ແລະ ລົງວິໄນຕໍ່ຜູ້ລະເມີດ, ພ້ອມກັນຜ່ານຜ່າຄວາມຫຍຸ້ງຍາກນາໆປະການ ຈຶ່ງສາມາດປະຕິບັດສຳເລັດໜ້າທີ່ ພັກ ແລະ ລັດ ມອບໝາຍໃຫ້ຕາມລະດັບຄາດໝາຍທີ່ວາງໄວ້.

# ສຳເລັດການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາປະຊິນແຂວງຜົ້ງສາລີ ຊຸດທີ II

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາປະຊິນແຂວງຜົ້ງສາລີ ຊຸດທີ II ໄດ້ອັດລົງດ້ວຍຜົນສຳເລັດ ໃນຕອນບ່າຍຂອງວັນທີ 10 ກຸມພາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຜົ້ງສາລີ ໂດຍການເປັນປະທານ ສົມຈິດ ທັບລະກອນ ຮອງປະທານສະພາປະຊາຊົນແຂວງ; ມີທ່ານເຈົ້າແຂວງ, ຮອງເຈົ້າແຂວງ, ບັນດາທ່ານສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງ 2 ແຂວງຜົ້ງສາລີ; ສະມາຊິກສະພາປະຊາຊົນແຂວງ, ອະດີດປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ; ສະມາຊິກອົງການປົກຄອງແຂວງ, ປະທານແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ອົງການຈັດພັກ-ລັດ, ຫົວໜ່ວຍທຸລະກິດ ທັງພາກລັດ ແລະເອກະຊົນເຂົ້າຮ່ວມ.

ທ່ານ ສົມຈິດ ທັບລະກອນ ໄດ້ມີຄຳເຫັນກ່າວອັດກອງປະຊຸມຄັ້ງນີ້ ເຊິ່ງມີເນື້ອໃນບາງຕອນວ່າ: "ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ດຳເນີນມາເປັນເວລາ 2 ວັນ ແຕ່ວັນທີ 9-10 ກຸມພາ 2023 ໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາທີ່ສຳຄັນຂອງແຂວງ ດັ່ງນີ້:

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດປະຈຳປີ 2022 ແລະ ແຜນການປະຈຳປີ 2023 ເຊິ່ງໄດ້ຕີລາຄາສູງຕໍ່ຄວາມພະຍາຍາມຂອງອົງການປົກຄອງແຂວງໃນການສູ້ຊົນເຮັດໃຫ້ອັດຕາການເຕີບໂຕທາງດ້ານເສດຖະກິດສາມາດບັນລຸໄດ້ 7,14% ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ ແລະ ສາມາດປະຄັບປະຄອງເສດຖະກິດບໍ່ໃຫ້ເຂົ້າສູ່ວິກິດການທີ່ໜັກໜ່ວງໄປກວ່ານີ້, ມີການແກ້ໄຂບັນຫາການເໜັງຕີງແຮງຂອງລາຄາສິນຄ້າ, ຄວາມຫຍຸ້ງຍາກທາງດ້ານເສດຖະກິດ. ພ້ອມກັນນັ້ນ, ກໍແມ່ນຊ່ວງໄລຍະທີ່ພວມຈັດຕັ້ງປະຕິບັດດຳລັດ ເລກທີ 559/ລບ; ໄດ້ມີການໂຄສະນາເຜີຍແຜ່, ປຸກລະດົມໃຫ້ປະຊາຊົນລາວບັນດາເຜົ່າ ຊາວແຂວງຜົ້ງສາລີເພີ່ມທະວີນ້ຳໃຈປະຢັດມັດທະຍັດ, ມີຄວາມສາມັກຄີເປັນຈິດໜຶ່ງໃຈດຽວ ພ້ອມກັນແກ້ໄຂບັນຫາໃນເວລາທີ່ແຂວງຜົ້ງສາລີປະສົບກັບຄວາມຫຍຸ້ງຍາກ. ກອງປະຊຸມມອບໃຫ້ອົງການປົກຄອງແຂວງ ນຳເອົາຄວາມຄິດເຫັນຂອງກອງປະຊຸມ ໄປພິຈາລະນາເພື່ອສືບຕໍ່ປັບປຸງແກ້ໄຂ ເປັນຕົ້ນ: ເອົາໃຈໃສ່ແກ້ໄຂຂໍ້ຄົງຄ້າງ, ອຸປະສັກ ແລະ ຂອດອຸດຕັນ ຂອງການແກ້ບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ເອົາໃຈໃສ່ຊຸກຍູ້ສົ່ງເສີມການຜະລິດພາຍໃນໃຫ້ມີຄວາມເຂັ້ມແຂງ ໂດຍສະເພາະສົ່ງເສີມການຜະລິດ ເພື່ອທົດແທນການນຳເຂົ້າ ແລະ ສົ່ງເສີມການສົ່ງອອກໃຫ້ໄດ້ຫຼາຍຂຶ້ນ, ເອົາໃຈໃສ່ປະເມີນຄວາມຄືບໜ້າ ແລະ ສືບຕໍ່ເອົາໃຈໃສ່ປະຕິບັດວຽກຈຸດສຸມພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໃນເຂດຈຸດສຸມ, ເມືອງ ແລະບ້ານ ທີ່ໄດ້ກຳນົດໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້, ສືບຕໍ່ເອົາໃຈໃສ່ປະຕິບັດບັນດາຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ໃຫ້ໄດ້ຮັບຜົນທາງດ້ານປະສິດທິພາບ ແລະ ປະສິດທິຜົນເປັນຕົ້ນແມ່ນຍົກສູງຄຸນນະພາບການສຶກສາ, ປັບປຸງຈັນຍາບັນ-ຈັນຍາທຳຂອງແພດໝໍ ແລະ ອຸປະກອນການແພດໃຫ້ໄດ້ຮັບຄຸນນະພາບຂຶ້ນ.

ກອງປະຊຸມໄດ້ຟັງການລາຍງານຂອງອົງການປົກຄອງແຂວງ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ. ຕະຫຼອດໄລຍະ 1 ປີທີ່ຜ່ານມາ ອົງການປົກຄອງແຂວງ ໄດ້ສົມທົບກັບສະພາປະຊາຊົນແຂວງ ຊີ້ນຳ-ບັນຊາການຈັດຕັ້ງຜັນຂະຫຍາຍມະຕິຂອງຄະນະບໍລິຫານງານພັກແຂວງເປັນອັນລະອຽດເຂົ້າໃນນິຕິກຳຂອງແຂວງ ແລະຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຢ່າງເປັນຂະບວນການກວ້າງຂວາງ ທັງຢູ່ຂັ້ນແຂວງ ແລະ ຂັ້ນເມືອງເຊິ່ງໄດ້ຮັບຜົນສຳເລັດຫຼາຍດ້ານ. ຄຽງຄູ່ກັນນັ້ນ, ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງເພີ່ມທະວີການໂຄສະນາເຜີຍແຜ່, ປຸກລະດົມໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ເຂົ້າໃຈ ແລະ ເຫັນໄດ້ຄວາມຈຳເປັນຂອງການຈັດຕັ້ງປະຕິບັດວາລະແຫ່ງຊາດ ໂດຍກຳນົດວຽກຈຸດສຸມຢ່າງລະອຽດພາຍໃນແຂວງ (ກຳນົດເວລາ 3 ປີ ແຕ່ປີ 2021-2023) ໂດຍມີ 3 ຫຼັກການ ເພື່ອບັນລຸຄື: ຫຼັກການໂປ່ງໃສ, ເດັດຂາດ, ທັນເປັນມືອາຊີບ ແນໃສ່ເຮັດໃຫ້ແຂວງຜົ້ງສາລີ ຫຼຸດພົ້ນອອກຈາກສະພາວະຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ-ການເງິນ ແລະ ບັນຫາຢາເສບຕິດໃຫ້ຫຼຸດໜ້ອຍຖອຍລົງເລື້ອຍໆ ເຊິ່ງກອງປະຊຸມມອບໃຫ້ອົງການປົກຄອງແຂວງ ຮີບຮ້ອນສືບຕໍ່ຊີ້ນຳບັນດາພະແນກການ, ອົງການ ແລະ ອົງການປົກຄອງເມືອງຈົ່ງຍົກສູງຄວາມຮັບຜິດຊອບຂອງຕົນ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດໃຫ້ມີປະສິດທິພາບ, ປະສິດທິຜົນ ແລະເປັນຮູບປະທຳຕົວຈິງ.



ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງຄືນ ກ່ຽວກັບແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຮອບດ້ານແຂວງຜົ້ງສາລີ ເພື່ອເປັນການວາງແຜນການນຳໃຊ້, ການຄຸ້ມຄອງຊັບພະຍາກອນທຳມະຊາດ ໂດຍສະເພາະທີ່ດິນພາຍໃນແຂວງ, ປົກປັກຮັກສາສິ່ງແວດລ້ອມ ໃຫ້ມີຄວາມຖືກຕ້ອງສອດຄ່ອງຕາມສະພາບຄວາມເປັນຈິງ, ເພື່ອຄວາມເປັນລະບຽບຮຽບຮ້ອຍ ຮັບປະກັນຄຸນນະພາບ ແລະ ມີຄວາມຍືນຍົງ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງອົງການກວດສອບແຫ່ງລັດປະຈຳພາກເໜືອ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021; ບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວ ວຽກງານປະຈຳປີ 2023, ບົດລາຍງານຜົນການຕິດຕາມກວດກາ ແລະ ແກ້ໄຂຕາມຜົນຂອງການກວດສອບປະຈຳປີ 2020 ເຊິ່ງກອງປະຊຸມໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງ ຕໍ່ອົງການກວດສອບແຫ່ງລັດປະຈຳພາກເໜືອ ແລະ ອົງການກວດກາລັດແຂວງ ທີ່ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍ ເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ມີປະສິດທິຜົນ, ການຈັດຕັ້ງປະຕິບັດວິໄນແຜນການ-ການເງິນ ມີຄວາມເຂັ້ມງວດຫຼາຍຂຶ້ນ. ພ້ອມກັນນັ້ນ, ກອງປະຊຸມໄດ້ສະເໜີໃຫ້ສອງອົງການ ເອົາໃຈໃສ່ສົມທົບພາກສ່ວນກ່ຽວຂ້ອງ ແກ້ໄຂຜົນການກວດສອບໃຫ້ເປັນຮູບປະທຳຫຼາຍຂຶ້ນກວ່າເກົ່າ ເປັນຕົ້ນ: ການເກັບກູ້ວັດຖຸ, ເງິນຄຳ ທີ່ເປັນຊັບສິນລວມຂອງລັດກັບຄືນ, ຄົ້ນຄວ້າການກຳນົດຂອບເຂດສິດຂອງສອງອົງການ ເຂົ້າໃນກົດໝາຍໃຫ້ລະອຽດ, ຈະແຈ້ງຕື່ມ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງສານປະຊາຊົນແຂວງ ແລະ ອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນ ການປະຈຳປີ 2023 ເຊິ່ງກອງປະຊຸມໄດ້ຕີລາຄາ ທັງສອງອົງການ ໄດ້ມີຄວາມພະຍາຍາມປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ໄດ້ຍົກສູງຄຸນນະພາບໃນການດຳເນີນຄະດີຕາມຂະບວນຍຸຕິທຳ ນັບມື້ມີຄຸນນະພາບສູງຂຶ້ນ, ເອົາໃຈໃສ່ການຜັນຂະຫຍາຍມະຕິ, ຄຳສັ່ງ ເຂົ້າໃນການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍຂອງຕົນ ໃຫ້ເປັນລະບົບຄົບຊຸດ, ເປັນບ່ອນອີງໃນການແກ້ໄຂບັນຫາຕ່າງໆ, ເຮັດໃຫ້ປະຊາຊົນມີຄວາມເຊື່ອໝັ້ນ ໃນການປະຕິບັດຄຳຕັດສິນຂອງສານ, ແກ້ໄຂບັນຫາຄວາມຫຍຸ້ງຍາກຂອງການດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ມີບາດກ້າວຫັນປ່ຽນທີ່ດີຂຶ້ນ. ນອກຈາກນັ້ນ, ກອງປະຊຸມໄດ້ສະເໜີໃຫ້ສານປະຊາຊົນແຂວງ ແລະ ອົງການໄອຍະການປະຊາຊົນແຂວງ ມີມາດຕະການປັບປຸງ ແລະ ແກ້ໄຂບັນດາຈຸດອ່ອນ, ຂໍ້ຄົງຄ້າງ ໃຫ້ໄດ້ຮັບການແກ້ໄຂຢ່າງຈິງຈັງ, ເພີ່ມທະວີການເຄື່ອນໄຫວປະຕິບັດໜ້າທີ່ຂອງຜູ້ພິພາກສາ ໃຫ້ມີຈັນຍາບັນ, ຈັນຍາທຳ, ໂປ່ງໃສ ແລະ ມີຄວາມຍຸຕິທຳ ໃນການຕັດສິນຄະດີ, ຍົກສູງຄຸນນະພາບການຄົ້ນຄວ້າ ແລະ ແກ້ໄຂຄະດີອາຍາ, ຄະດີແພ່ງ ແລະ ຄຳຮ້ອງ, ຄຳສະເໜີ ໃຫ້ບັນລຸຕາມຄາດໝາຍ, ເພີ່ມທະວີການຕິດຕາມກວດກາ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາ ຮ່າງນິຕິກຳໃຕ້ກົດໝາຍສ້າງໃໝ່ 1 ສະບັບ ຄື: ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງການປຸກສ້າງທົ່ວແຂວງຜົ້ງສາລີ ເຊິ່ງເປັນການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍໄລຍະ 5 ປີຂອງສະພາປະຊາຊົນແຂວງ ຊຸດທີ II ທັງເປັນການປະກອບສ່ວນສຳຄັນ ໃນການປັບປຸງ ແລະ ເພີ່ມທະວີພາຫະນະ, ເຄື່ອງມືຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຂອງແຂວງເຮົາ ໃຫ້ເປັນລະບົບຄົບຊຸດ ເພື່ອຮັບປະກັນການປົກປ້ອງສິດແລະຜົນປະໂຫຍດຂອງແຂວງ; (ຂອງລັດ, ລວມໝູ່, ນິຕິບຸກຄົນ ແລະ ປະຊາຊົນບັນດາເຜົ່າ) ຮັບປະກັນໃຫ້ແກ່ສ້າງລັດ ປະຊາທິປະໄຕ ປະຊາຊົນຂອງພວກເຮົາ ໃຫ້ເປັນລັດທີ່ປົກຄອງລະບຽບດ້ວຍກົດໝາຍ. ນອກຈາກນີ້, ກອງປະຊຸມຍັງໄດ້ຮຽກຮ້ອງ ໃຫ້ອົງການກ່ຽວຂ້ອງ ເອົາໃຈໃສ່ຄົ້ນຄວ້າ, ປັບປຸງບາງເນື້ອໃນ ຂອງຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມຖືກຕ້ອງ, ສອດຄ່ອງ ຕາມສະພາບເງື່ອນໄຂຂອງແຂວງພວກເຮົາ ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ໄດ້ຮັບປະຕິທິຜົນສູງ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງສະພາປະຊາຊົນແຂວງ ກ່ຽວກັບການ ເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023. ກອງປະຊຸມຕີລາຄາວ່າ ໃນໜຶ່ງປີຜ່ານມາ ສະພາປະຊາຊົນແຂວງ ໄດ້ມີຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ໄດ້ຮັບຜົນສຳເລັດຫຼາຍດ້ານ ເຮັດໃຫ້ບົດບາດຂອງສະພາປະຊາຊົນແຂວງໄດ້ຮັບການເຊີດຊູນັບມື້ສູງຂຶ້ນ, ໄດ້ຮັບຄວາມເຊື່ອໝັ້ນຈາກອົງການຈັດຕັ້ງລັດຂັ້ນຕ່າງໆ ແລະ ປະຊາຊົນຜູ້ມີສິດເລືອກຕັ້ງ ນັບມື້ນັບກວ້າງຂວາງ. ກອງປະຊຸມສະເໜີໃຫ້ເອົາໃຈໃສ່ການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ໃນການຄຸ້ມຄອງລັດ-ສັງຄົມໃນແຕ່ລະໄລຍະ ແລະ ມີຄວາມສັກສິດຫຼາຍຂຶ້ນ; ເພີ່ມທະວີການປະຕິບັດພາລະບົດບາດຕິດຕາມກວດກາຢ່າງມີຈຸດສຸມ, ຮ່ວມກັບອົງການປົກຄອງແຂວງ, ອົງການຈັດຕັ້ງລັດທຽບເທົ່າ ແກ້ໄຂບັນຫາຕ່າງໆຢ່າງທັນການ ລວມທັງການນຳເອົາຜົນສຳເລັດຂອງກອງປະຊຸມ ກໍຄືນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ລັດ ໄປຜັນຂະຫຍາຍ, ເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງ ຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງຂວາງ;

ກອງປະຊຸມໄດ້ຮັບຟັງການຊີ້ແຈງ ຕໍ່ຄຳຖາມເຈາະຈີ້ມທີ່ສະມາຊິກສະພາປະຊາຊົນແຂວງ ກໍຄືປະຊາຊົນບັນດາເຜົ່າທີ່ມີຄວາມສົນໃຈຫຼາຍ ຈາກ 6 ພາກສ່ວນ (ຂອງພະແນກການ, ອົງການຂັ້ນແຂວງ) ແລະ ໄດ້ຮັບຟັງການຊີ້ແຈງຂອງກອງບັນຊາການ ປກສ ແຂວງ ແລະ ອົງການກວດກາລັດແຂວງ ຕາມການປະກອບຄຳເຫັນ ຂອງສະມາຊິກສະພາປະຊາຊົນແຂວງ.

ກອງປະຊຸມມີຄວາມເຊື່ອໝັ້ນວ່າ ແຕ່ລະພາກສ່ວນຈະສືບຕໍ່ເສີມຂະຫຍາຍຜົນສຳເລັດທີ່ຍາດມາໄດ້ໃນປີຜ່ານມາ, ສູ້ຊົນຈຳກັດ ແລະ ປັບປຸງແກ້ໄຂບັນດາອຸປະສັກ, ສິ່ງກີດຂວາງ ໃນຂົງເຂດວຽກງານທີ່ຕົນຮັບຜິດຊອບ ຕິດພັນກັບການຍູ້ແຮງຂະບວນການແຂ່ງຂັນຮັກຊາດພັດທະນາເພື່ອສ້າງໃຫ້ມີການຫັນປ່ຽນທີ່ດີຂຶ້ນຢ່າງຈະແຈ້ງ, ສືບຕໍ່ຕັ້ງໜ້າຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີຄັ້ງທີ IX ເວົ້າລວມເວົ້າສະເພາະມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງອົງຄະນະພັກແຂວງ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 5 ປີຄັ້ງທີ IX ຂອງແຂວງ ກໍຄືແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດໃຫ້ເປັນຮູບປະທຳ ແລະ ມີໝາກຜົນຕົວຈິງຫຼາຍຂຶ້ນ ແນໃສ່ແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ນັບມື້ນັບດີຂຶ້ນ ແລະ ແກ້ໄຂບັນຫາຢາເສບຕິດໃຫ້ຫຼຸດລົງເທື່ອລະກ້າວ.

ຜົນສຳເລັດຂອງກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ຄັ້ງນີ້ ເປັນການ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງອົງຄະນະພັກແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງແຂວງ ເຂົ້າສູ່ຊີວິດຕົວຈິງ, ແມ່ນໝາກຜົນແຫ່ງສະຕິປັນຍາ, ການຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ຄວາມຕັດສິນໃຈຂອງອົງການປົກຄອງແຂວງ, ບັນດາພະແນກການ, ອົງການທີ່ກ່ຽວຂ້ອງ ທີ່ຈະສືບຕໍ່ພັດທະນາແຂວງຜົ້ງສາລີ ໃນສະພາບມີຄວາມຫຍຸ້ງຍາກທາງ ດ້ານເສດຖະກິດ-ການເງິນ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້, ນຳພາແຂວງຜົ້ງສາລີກ້າວຂຶ້ນຢ່າງໜັກແໜ້ນ.

ເພື່ອສືບຕໍ່ຈັດຕັ້ງຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມຄັ້ງນີ້, ກອງປະຊຸມຮຽກຮ້ອງມາຍັງບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ບັນດາຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເມືອງ, ອົງການປົກຄອງແຂວງ, ອົງການປົກຄອງເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນຜັນຂະຫຍາຍເນື້ອໃນມະຕິກອງປະຊຸມຄັ້ງນີ້ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ຮັບຜົນສຳເລັດຢ່າງຈົບງາມ ກໍຍ້ອນມີການຊີ້ນຳຢ່າງໃກ້ຊິດຈາກຄະນະປະຈຳພັກແຂວງ ແລະ ຍ້ອນຄວາມ ຮັບຜິດຊອບສູງຂອງອົງການປົກຄອງແຂວງ, ພະແນກການ, ບັນດາອົງການ ແລະ ຂະແໜງການກ່ຽວຂ້ອງ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງອັດຕະປື ອັດລົງດ້ວຍຜົນສຳເລັດ



(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງອັດຕະປື ຊຸດທີ II ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມ ໃນຕອນບ່າຍຂອງວັນທີ 10 ກຸມພາ 2023 ນີ້ທີ່ຫ້ອງປະຊຸມສະພາປະຊາຊົນແຂວງໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງອັດຕະປື; ເຂົ້າຮ່ວມມີການນຳພັກ-ລັດຂັ້ນສູງຂອງແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື, ບັນດາສະມາຊິກສະພາປະຊາຊົນແຂວງ, ບັນດາທ່ານເຈົ້າເມືອງ, ອະດີດການນຳພັກ-ລັດແຂວງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໃນວາລະປິດກອງປະຊຸມ, ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ກ່າວສູນທອນພິດປິດກອງປະຊຸມຢ່າງເປັນທາງການວ່າ: ກອງປະຊຸມສະໄໝສາມັນເທື່ອ 4 ຂອງສະພາປະຊາຊົນແຂວງອັດຕະປື ຊຸດທີ II ໄດ້ບັນລຸຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້, ໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂອງແຂວງ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023. ກອງປະຊຸມໄດ້ຕີລາຄາສູງຕໍ່ຄວາມເປັນເອກະພາບ ແລະ ຄວາມພະຍາຍາມຂອງອົງການປົກຄອງແຂວງ, ອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງສັງຄົມ ກໍຄືປະຊາຊົນບັນດາເຜົ່າ ໃນການສູ້ຊົນເຮັດໃຫ້ອັດຕາການເຕີບໂຕທາງດ້ານເສດຖະກິດສາມາດບັນລຸໄດ້ 4,87% ການຈັດເກັບລາຍຮັບເຂົ້າງົບປະມານປະຕິບັດໄດ້ລື່ນແຜນ, ສາມາດຕອບສະໜອງດ້ານລາຍຈ່າຍໃຫ້ແກ່ການເຄື່ອນໄຫວວຽກງານຕ່າງໆຂອງແຂວງ ໄດ້ໂດຍພື້ນຖານ. ເຮັດໃຫ້ສາມາດຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ. ນອກນັ້ນ, ກອງປະຊຸມຍັງມອບໃຫ້ອົງການປົກຄອງແຂວງ ນຳເອົາຄຳຄິດເຫັນຂອງຜູ້ແທນກອງປະຊຸມນຳໄປພິຈາລະນາ ເພື່ອສືບຕໍ່ປັບປຸງແກ້ໄຂບັນຫາທີ່ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ບັນຫາອື່ນໆ ໃຫ້ກັບສູ່ສະພາບປົກກະຕິ.

ນອກນັ້ນ, ກອງປະຊຸມໄດ້ຮັບຟັງການລາຍງານຂອງອົງການປົກຄອງແຂວງ ກ່ຽວກັບວຽກງານການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ. ໄລຍະຜ່ານມາເຫັນໄດ້ວ່າຄະນະພັກ, ຄະນະນຳຂັ້ນແຂວງ-ເມືອງ ໄດ້ເປັນເຈົ້າການຈັດຕັ້ງຜັນຂະຫຍາຍບັນດາເນື້ອໃນຈິດໃຈຂອງມະຕິກອງປະຊຸມສະພາແຫ່ງຊາດ ໃຫ້ເປັນແຜນວຽກ, ແຜນງານຢ່າງລະອຽດເຂົ້າໃສ່ໃນຂົງເຂດວຽກງານທີ່ຕົນຮັບຜິດຊອບໄດ້ຮັບຜົນສຳເລັດເປັນກ້າວໆ ເຊິ່ງສະແດງໃຫ້ເຫັນດ້ານການຜະລິດກະສິກຳ ໄດ້ມີບາດກ້າວຂະຫຍາຍຕົວຕໍ່ເນື່ອງ; ບັນຫາຢາເສບຕິດໄດ້ຮັບການແກ້ໄຂຢ່າງຈິງຈັງ, ມີການເຂົ້າຮ່ວມຢ່າງກວ້າງຂວາງ.

ກອງປະຊຸມໄດ້ຮັບຟັງການລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານແກ້ໄຂໄພພິບັດຢູ່ເມືອງສະໜາມໄຊ ແລະ ການສ້າງວິຊາຊີບ, ພັດທະນາສີມືແຮງງານ, ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ ເພື່ອແກ້ໄຂບັນຫາການຫວ່າງງານ. ກອງປະຊຸມສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄວາມພະຍາຍາມຂອງອົງການປົກຄອງແຂວງ, ຂະແໜງການທີ່ກ່ຽວຂ້ອງທຸກຂັ້ນ ທີ່ໄດ້ສຸມໃສ່ແກ້ໄຂວິກິດການຄັ້ງນີ້ໃຫ້ຜ່ານພົ້ນໄປໂດຍໄວ, ການຄຸ້ມຄອງການຊ່ວຍເຫຼືອຈາກພາກສ່ວນຕ່າງໆ ແລະ ການມີສ່ວນຮ່ວມຂອງສັງຄົມ, ການສ້າງເງື່ອນໄຂໃຫ້ຊາວໜຸ່ມມີວຽກເຮັດງານທຳມີວິຊາອາຊີບທີ່ໝັ້ນຄົງ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນທີ່ຖືກຜົນກະທົບໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ. ນອກນັ້ນ, ກອງປະຊຸມຍັງໄດ້ມອບໃຫ້ອົງການປົກຄອງແຂວງສືບຕໍ່ຊຸກຍູ້ຂະແໜງການທີ່ກ່ຽວຂ້ອງ ປັບປຸງແກ້ໄຂບັນຫາທີ່ຍັງຄົງຄ້າງ ຕາມການສະເໜີຂອງຜູ້ແທນກອງປະຊຸມ ເພື່ອເປັນການພື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ເຂົ້າສູ່ສະພາບປົກກະຕິໂດຍໄວ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງອົງການກວດສອບປະຈຳພາກໃຕ້; ບົດລາຍງານການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021 ແລະ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງອົງການກວດກາລັດແຂວງ; ບົດລາຍງານຜົນການກວດສອບປະຈຳປີ 2020 ເຊິ່ງກອງປະຊຸມໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ອົງການກວດສອບປະຈຳພາກໃຕ້, ອົງການກວດກາລັດແຂວງ ເອົາໃຈໃສ່ປະຕິບັດພາລະບົດບາດ ແລະ ໜ້າທີ່ຂອງຕົນຕາມລະບຽບກົດໝາຍ ໃຫ້ເຂັ້ມແຂງ. ພ້ອມນັ້ນ, ກອງປະຊຸມຍັງໄດ້ສະເໜີໃຫ້ 2 ອົງການເອົາໃຈໃສ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເອົາໃຈໃສ່ ແກ້ໄຂຜົນຂອງການກວດສອບທີ່ຍັງຄ້າງໃຫ້ໄດ້ຮັບການແກ້ໄຂໂດຍໄວ;

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ. ກອງປະຊຸມໄດ້ຕີລາຄາຕໍ່ທັງສອງອົງການ ທີ່ໄດ້ມີຄວາມພະຍາຍາມປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ໄດ້ຍົກສູງຄຸນນະພາບໃນການຕິດຕາມກວດກາ ແລະ ການດຳເນີນຄະດີຕາມຂະບວນຍຸຕິທຳ. ກອງປະຊຸມສະເໜີໃຫ້ອົງການໄອຍະການປະຊາຊົນເອົາໃຈໃສ່ປະຕິບັດພາລະບົບບາດໃນການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ການດຳເນີນຄະດີ, ການປະຕິບັດຄຳຕັດສິນຂອງສານ ໃຫ້ຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍ ແລະ ສານປະສານຊາຊົນແຂວງ ເອົາໃຈໃສ່ຍົກສູງຄວາມຮູ້ຄວາມສາມາດທາງດ້ານທິດສະດີ ແລະ ວິຊາສະເພາະ ເພື່ອໃຫ້ແກ່ພະນັກງານ-ລັດຖະກອນ ໃຫ້ກາຍເປັນຜູ້ພິພາກສາທີ່ດີ-ເກັ່ງ, ການຄົ້ນຄ້ວາພິຈາລະນາສາມາດຮັບປະກັນຄວາມຖືກຕ້ອງ, ທັນເວລາ ແລະ ຍຸຕິທຳ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົານິຕິກຳໃຕ້ກົດໝາຍ ຂອງອົງການປົກຄອງແຂວງ ຈຳນວນ 3 ສະບັບ ໃນນັ້ນມີ: (1) ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍສັນຍາແຮງງານ; (2) ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການສ້າງ ແລະ ການຄຸ້ມຄອງຟາມລ້ຽງສັດ; (3) ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ ແລະ ການນຳໃຊ້ຢາປາບສັດຕູພືດ; ການສ້າງນິຕິກຳແມ່ນການຈັດຕັ້ງຜັນຂະຫຍາຍເນື້ອໃນກົດໝາຍໃຫ້ເປັນອັນລະອຽດ, ເປັນເຄື່ອງມືຮັບໃຊ້ພາຍໃນແຂວງ ເພື່ອຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ. ກອງປະຊຸມໄດ້ສະເໜີໃຫ້ຄະນະຮັບຜິດຊອບສ້າງນິຕິກຳໃຕ້ກົດໝາຍ ນຳເອົາເນື້ອໃນຄຳຄິດຄຳເຫັນຂອງຜູ້ແທນກອງປະຊຸມ ເພື່ອໄປປັບປຸງແກ້ໄຂໃຫ້ມີຄວາມຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍ ແລະ ສອດຄ່ອງກັບສະພາບເສດຖະກິດ-ສັງຄົມຂອງແຂວງພວກເຮົາ. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງສະພາປະຊາຊົນຂັ້ນແຂວງ; ເຫັນວ່າຕະຫຼອດໄລຍະ 1 ປີຜ່ານມາ ສະພາປະຊາຊົນແຂວງໄດ້ເປັນເຈົ້າການດ້ວຍຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໄດ້ຮັບຜົນສຳເລັດໃນຫຼາຍດ້ານເຮັດໃຫ້ພາລະບົດບາດ ຂອງສະພາປະຊາຊົນແຂວງ ນັບມື້ສູງຂຶ້ນ, ໄດ້ຮັບຄວາມເຊື່ອໝັ້ນຈາກອົງການຈັດຕັ້ງພັກ-ລັດ ແລະ ສັງຄົມ ນັບມື້ນັບກວ້າງຂວາງ, ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກປະຊາຊົນຜູ້ມີສິດເລືອກຕັ້ງ. ກອງປະຊຸມສະເໜີໃຫ້ເອົາໃຈໃສ່ປະຕິບັດພາລະບົດບາດດ້ານການສ້າງ, ປັບປຸງນິຕິກຳໃຕ້ກົດໝາຍ ແລະ ປະເມີນນິຕິກຳທີ່ສະພາປະຊາຊົນແຂວງໄດ້ຮັບຮອງໄປ; ເພີ່ມທະວີການປະຕິບັດພາລະບົດບາດ ດ້ານການຕົກລົງບັນຫາພື້ນຖານຂອງທ້ອງຖິ່ນໃນການພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງແຂວງ, ດ້ານການຕິດຕາມກວດກາຢ່າງມີຈຸດສຸມຮ່ວມກັບອົງການປົກຄອງແຂວງແກ້ໄຂບັນຫາຕ່າງໆຢ່າງທັນການ ລວມທັງການນຳເອົາເນື້ອໃນຜົນສຳເລັດຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກໍຄືມະຕິ, ຄຳສັ່ງຂອງພັກ-ລັດ ໄປເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງຂວາງ.

ກອງປະຊຸມສະໄໝສາມັນເທື່ອ 4 ຄັ້ງນີ້ ໄດ້ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງກົງຈັກບຸກຄະລາກອນຂອງແຂວງ ຕາມການສະເໜີ ຂອງທ່ານເຈົ້າແຂວງຄື: ແຕ່ງຕັ້ງທ່ານ ສະພາສິດ ລໍວັນໄຊ ເປັນຫົວໜ້າອົງການໄອຍະການປະຊາຊົນແຂວງອັດຕະປື. ກອງປະຊຸມຍັງໄດ້ຮັບຟັງການຊີ້ແຈງຈາກບັນດາຂະແໜງການທີ່ກ່ຽວຂ້ອງຕໍ່ກັບຂໍ້ຊັກຖາມຂອງຄະນະປະຈຳສະພາປະຊາຊົນແຂວງຕັ້ງຂຶ້ນ ແລະ ຕໍ່ການປະກອບຄຳເຫັນຂອງສະມາຊິກສະພາປະຊາຊົນຂັ້ນແຂວງ.

ຕະຫຼອດໄລຍະ 4 ວັນຂອງການດຳເນີນກອງປະຊຸມສະໄໝສາມັນເທື່ອ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ມີພໍ່ແມ່ປະຊາຊົນ ກໍຄືຜູ້ມີສິດເລືອກຕັ້ງ ໂທເຂົ້າມາຍັງສາຍດ່ວນທັງໝົດ 20 ສາຍ ໃນນັ້ນ, ຂົງເຂດເສດຖະກິດ 15 ສາຍ; ຂົງເຂດວັດທະນະທຳ-ສັງຄົມ 3 ສາຍ; ຂົງເຂດອົງການປົກຄອງແຂວງ 2 ສາຍ.

ຜົນສຳເລັດຂອງການດຳເນີນກອງປະຊຸມຄັ້ງນີ້ ແມ່ນໝາກຜົນລວມຍອດ ແຫ່ງການເສີມຂະຫຍາຍສະຕິປັນຍາລວມໝູ່, ການຍົກສູງຄວາມຮັບຜິດຊອບທາງດ້ານການເມືອງ ຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ບວກກັບຄວາມຕັດສິນໃຈ ຂອງອົງການປົກຄອງແຂວງ, ພະແນກການ, ອົງການທີ່ກ່ຽວຂ້ອງ ທີ່ພ້ອມກັນສືບຕໍ່ພັດທະນາແຂວງອັດຕະປືໃນທ່າມກາງສະພາບທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ບັນລຸຄາດໝາຍທີ່ວາງໄວ້ ແລະ ມີຜົນສຳເລັດເປັນຢ່າງດີ.

ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ໄດ້ຮັບຜົນສຳເລັດຢ່າງຈົບງາມ ຍ້ອນໄດ້ຮັບການຊີ້ນຳຈາກຢ່າງໃກ້ຊິດຈາກຄະນະປະຈຳພັກແຂວງ, ຍ້ອນຄວາມຮັບຜິດຊອບຂອງສະມາຊິກສະພາປະຊາຊົນແຂວງ, ອົງການປົກຄອງແຂວງ, ບັນດາພະແນກການ ແລະ ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ,ທີ່ໃຫ້ການຮ່ວມມືເປັນຢ່າງດີ.

(ວິນັດ)



# ສະພາປະຊາຊົນແຂວງອຸດົມໄຊ ສຳເລັດການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມໃນຕອນບ່າຍຂອງວັນ ວັນສຸກທີ 3 ກຸມພາ 2023 ຢູ່ທີ່ສະໂມສອນແຂວງອຸດົມໄຊ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມກອງປະຊຸມໂດຍທ່ານ ບຸນຄົງ ຫຼ້າຈຽມພອນ ກຳມະການສຳຮອງສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງອຸດົມໄຊ, ມີບັນດາທ່ານຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ອົງການທຽບເທົ່າ, ເຈົ້າເມືອງ 7 ເມືອງ, ອະດີດສະມາຊິກສະພາແຫ່ງຊາດ, ອະດີດສະມາຊິກສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 4, ສະມາຊິກສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II, ບັນດາທະນາຄານ ແລະ ແຂກເຊີນເຂົ້າຮ່ວມ.



ທ່ານ ຄຳດີ ວົງລ້ອມ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງ ໄດ້ມີຄຳເຫັນກ່າວອັດກອງປະຊຸມຄັ້ງນີ້ວ່າ: ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ດຳເນີນມາເປັນເວລາ 3 ວັນ, ດ້ວຍບັນຍາກາດແຫ່ງການເສີມຂະຫຍາຍສິດປະຊາທິປະໄຕຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ ໃນການພິຈາລະນາ ແລະ ຮັບຮອງເອົາບັນດາເນື້ອໃນສຳຄັນພື້ນຖານຂອງແຂວງທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເປັນຕົ້ນແມ່ນແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ບັນຫາອື່ນໆທີ່ຈະສືບຕໍ່ຈັດຕັ້ງປະຕິບັດໃນປີ 2023.

ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາການສ້າງນິຕິກຳຂອງອົງການປົກຄອງແຂວງ ຈຳນວນ 4 ສະບັບຄື: ຂໍ້ຕົກລົງວ່າດ້ວຍ ການນຳໃຊ້ນ້ຳ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ຢາປາບສັດຕູພືດ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ຄ່າທຳນຽມ ແລະ ຄ່າບໍລິການ ແລະ ຂໍ້ຕົກລົງ ວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ. ພ້ອມນັ້ນ, ຍັງໄດ້ຮັບຟັງການລາຍງານ ການຈັດຕັ້ງປະຕິບັດ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາເສດຖະກິດ-ການເງິນ, ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ການແກ້ໄຂປະກົດການຫຍໍ້ທໍ້ອື່ນໆພາຍໃນແຂວງ ເຊິ່ງເຫັນວ່າອົງການປົກຄອງແຂວງ ແລະ ການນຳ ໄດ້ເອົາໃຈໃສ່ນຳພາ-ຊີ້ນຳບັນດາອົງການຈັດຕັ້ງແຕ່ລະຂັ້ນ ກໍຄືປະຊາຊົນບັນດາເຜົ່າ ຈັດຕັ້ງປະຕິບັດວາລະແຫ່ງຊາດ ດ້ວຍການຜັນຂະຫຍາຍເປັນແຜນງານ, ໂຄງການລະອຽດ ແລະ ສູ້ຊົນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດເປັນກ້າວໆ.

ກອງປະຊຸມຍັງໄດ້ຮັບຟັງການປະກອບຄຳເຫັນຂອງອົງການແນວລາວສ້າງຊາດ ຕໍ່ບົດລາຍງານການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ຊຶ່ງເປັນຂໍ້ມູນທີ່ດີໃຫ້ແກ່ການປັບປຸງການເຄື່ອນໄຫວວຽກງານລວມ ແລະ ວຽກງານສະເພາະຕາມພາລະບົດບາດຂອງສະພາປະຊາຊົນແຂວງ, ກອງປະຊຸມໄດ້ຕີລາຄາສູງ ຕໍ່ການນຳພາ-ຊີ້ນຳຂອງຄະນະປະຈຳສະພາປະຊາຊົນແຂວງ, ການປະຕິບັດໜ້າທີ່ຂອງກົງຈັກເສນາທິການ ແລະ ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ທີ່ໄດ້ເອົາໃຈໃສ່ຢ່າງຕັ້ງໜ້າຜັນຂະຫຍາຍວຽກງານຂອງຕົນ ຕາມພາລະບົດບາດ ແລະ ສິດໜ້າທີ່ ໃນປີ 2022 ຊຶ່ງມີຜົນສຳເລັດຫຼາຍດ້ານເປັນຕົ້ນ ໄດ້ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3, ກອງປະຊຸມວິສາມັນຂອງຄະນະປະຈຳສະພາປະຊາຊົນແຂວງເພື່ອຮັບຮອງເອົານະຕິກຳທີ່ສຳຄັນ ແລະ ຮີບດ່ວນ ແລະ ກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງ, ອົງການປົກປ້ອງກົດໝາຍຂັ້ນແຂວງ ແລະ ວຽກງານອື່ນໆ ມີຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້. ພ້ອມກັນນັ້ນຍັງໄດ້ຮັບຟັງການປະກອບຄຳເຫັນຂອງ ທ່ານເຈົ້າແຂວງຊຶ່ງໄດ້ສັງລວມຄືນການບັນດາຄຳຊັກຖາມຂອງ ສສຂ ແລະ ການຕອບຄຳຊັກຖາມຂອງບັນດາອົງການທີ່ກ່ຽວຂ້ອງ ເພື່ອເປັນທິດໃນການຈັດຕັ້ງປະຕິບັດວຽກງານຂອງອົງການປົກຄອງໃນຕໍ່ໜ້າ.

ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາສະພາປະຊາຊົນແຂວງ ຊຸດທີ II ຄັ້ງນີ້ ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ແລະ ມະຕິກອງປະຊຸມໃຫ່ຍຄັ້ງທີ IX ຂອງອົງຄະນະພັກແຂວງເຂົ້າສູ່ລວງເລິກຕົວຈິງ, ແມ່ນໝາກຜົນແຫ່ງສະຕິປັນຍາ, ການຍົກສູງຄວາມຮັບຜິດຊອບການເມືອງ ຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ຄວາມຕັດສິນໃຈຂອງອົງການປົກຄອງແຂວງ ທີ່ຈະສືບຕໍ່ພັດທະນາແຂວງອຸດົມໄຊ ຕາມທິດ 4 ໃຈກາງ ທ່າມກາງຄວາມຜັນແປສັບສົນຂອງເສດຖະກິດໂລກ ກໍຄື ສປປລາວ.

ເພື່ອສືບຕໍ່ຈັດຕັ້ງຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມຄັ້ງນີ້, ກອງປະຊຸມ ຮຽກຮ້ອງມາຍັງຄະນະປະຈຳສະພາປະຊາຊົນແຂວງ, ບັນດາຄະນະກຳມະການການ, ສະມາຊິກສະພາປະຊາຊົນແຂວງ ຊຸດທີ II ປະຈຳເຂດເລືອກຕັ້ງເມືອງ, ອົງການປົກຄອງແຂວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງນຳເອົາເນື້ອໃນມະຕິກອງປະຊຸມຄັ້ງນີ້ ໄປຜັນຂະຫຍາຍ ເຂົ້າໃນຂົງເຂດວຽກງານທີ່ຕົນຄວາມຮັບຜິດຊອບໃຫ້ປະສົບກັບຜົນສຳເລັດເປັນຢ່າງດີ.

ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ຮັບຜົນສຳເລັດໃນຄັ້ງນີ້ ກໍຍ້ອນມີການຊີ້ນຳຢ່າງໃກ້ຊິດຈາກຄະນະນຳຂອງແຂວງ ແລະ ຍ້ອນຄວາມຮັບຜິດຊອບສູງຂອງຄະນະປະຈຳສະພາປະຊາຊົນແຂວງ, ອະນຸກຳມະການຕ່າງໆຂອງສະພາປະຊາຊົນແຂວງ, ບັນດາອົງການທີ່ກ່ຽວຂ້ອງທຸກພາກສ່ວນຂັ້ນແຂວງ; ຕາງໜ້າຄະນະປະຈຳສະພາ ແລະ ສະມາຊິກສະພາປະຊາຊົນແຂວງ ຂໍສະແດງຄວາມຮູ້ບຸນຄຸນຢ່າງສູງມາຍັງບັນດາທ່ານການນຳພັກ-ລັດ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມຄັ້ງນີ້ ແລະ ຂໍຂອບໃຈຕໍ່ປະຊາຊົນບັນດາເຜົ່າພາຍໃນແຂວງທີ່ໄດ້ຕິດຕາມກອງປະຊຸມຂອງພວກເຮົາຢ່າງຈິດຈໍ່ໂດຍຜ່ານສື່ຕ່າງໆ ແລະ ມີຄຳຄິດເຫັນສົ່ງເຂົ້າມາສູ່ກອງປະຊຸມໂດຍຜ່ານໂທລະສັບສາຍດ່ວນ.

ຕະຫຼອດໄລຍະດຳເນີນກອງປະຊຸມ 3 ວັນນັ້ນມີໂທລະສັບສາຍດ່ວນ (081 156) ທັງໝົດ 14 ສາຍ, ມີ 15 ບັນຫາ: ຂົງເຂດເສດຖະກິດ, ແຜນການ ແລະ ການເງິນ (ມີ 8 ສາຍ, ມີ 8 ບັນຫາດັ່ງນີ້), ຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ມີ 3 ສາຍ, ມີ 3 ບັນຫາດັ່ງນີ້), ຂົງເຂດຍຸຕິທຳ ແລະ ປກຊ-ປກສ (ມີ 3 ສາຍ, ມີ 4 ບັນຫາດັ່ງນີ້) ບັນດາຄຳສະເໜີເຫຼົ່ານັ້ນຄະນະປະຈຳສະພາປະຊາຊົນແຂວງຈະຈັດກອງປະຊຸມຄົ້ນຄວ້າແລ້ວ ເຮັດສະໂໜດນຳສົ່ງໃຫ້ອົງການທີ່ກ່ຽວຂ້ອງຄົ້ນຄວ້າພິຈາລະນາຕອບຄຳຂັດຂ້ອງໃຈຕໍ່ປະຊາຊົນກ່ຽວບັນຫາດັ່ງກ່າວຕາມພາລະບົດບາດ.

(ແສງພອນ ອິນນະລິງ)

# ກອງປະຊຸມຄົບຄະນະສະມາຊິກສະພາແຫ່ງຊາດ ເຂດ 18



(ສພຊ) ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ໄດ້ໄຂກອງປະຊຸມຄົບຄະນະ ປະຈຳປີ 2022 ແລະ ກຳນົດທິດທາງແຜນການ ປີ 2023 ໃນວັນທີ 13 ກຸມພານີ້ ທີ່ສະໂມສອນເມືອງອະນຸວົງ ໂດຍການເປັນປະທານຂອງທ່ານ ແດງ ປະທຸມທອງ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍທ່ານ ພອຍຄຳ ຮຸ່ງບຸນຍວງ ເລຂາພັກແຂວງ, ເຈົ້າແຂວງແຂວງໄຊສົມບູນ ພ້ອມດ້ວຍບັນດາທ່ານການນຳພັກ-ລັດຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18, ມີພະແນກການ, ອົງການ, ກົມກອງອ້ອມຂ້າງແຂວງພ້ອມດ້ວຍນັກປະຕິວັດອາວຸໂສ, ຜູ້ຊົງຄຸນວຸດທິ ແລະ ນັກທຸລະກິດ.

ໂອກາດນີ້, ທ່ານ ແດງ ປະທຸມທອງ ໄດ້ມີຄຳເຫັນກ່າວໄຂກອງປະຊຸມວ່າ: ໃນກອງປະຊຸມເທື່ອນີ້ ເພື່ອສະຫຼຸບຖອດຖອນບົດຮຽນ ໃນໄລຍະ ປີ 2022 ຜ່ານມາ ແລະ ກຳນົດແຜນການເຄື່ອນໄຫວວຽກງານປະຈຳປີ 2023 ຈຸດດີ, ຈຸດອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້ ຕະຫຼອດໄລຍະ 1 ປີຜ່ານມາ ເຫັນວ່າ ແຂວງໄຊສົມບູນ ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ເປັນລະບຽບຮຽບຮ້ອຍ, ເສດຖະກິດມີການຂະຫຍາຍຕົວຕໍ່ເນື່ອງ, ແຕ່ເຖິງແນວໃດກໍຕາມ ກໍຍັງພົບກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫລາຍດ້ານ ເພາະວ່າເປັນແຂວງພູດອຍ, ພື້ນຖານໂຄງລ່າງ, ເສັ້ນທາງໄປມາລະຫວ່າງເມືອງຫາເມືອງ ຍັງບໍ່ທັນຮັບປະກັນ, ປະຊາຊົນແຕ່ລະບ້ານຢູ່ຫ່າງໄກກັນ, ການດຳລົງຊີວິດຂອງປະຊາຊົນໃນເງື່ອນໄຂທີ່ແຕກຕ່າງກັນ ແລະ ຍັງເກີດມີປາກົດການຫຍໍ້ທໍ້ຕ່າງໆ ແຕ່ດ້ວຍຄວາມສາມັກຄີເປັນປຶກແຜ່ນ ບົນນ້ຳໃຈຮັກແພງ ຊ່ວຍເຫຼືອເຊິ່ງກັນແລະກັນ ຈາກທຸກພາກສ່ວນຂອງແຂວງ, ໄດ້ເຮັດໃຫ້ພວກເຮົາສາມາດຜ່ານຜ່າຄວາມຫຍຸ້ງຍາກ ແລະ ສາມາດແກ້ໄຂສະພາບການດັ່ງກ່າວ ດີຂຶ້ນເທື່ອລະກ້າວ ຊຶ່ງກອງປະຊຸມໃນຄັ້ງນີ້ ຈະໄດ້ຮັບຟັງ ແລະ ພິຈາລະນາຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ວາງທິດທາງແຜນການ ປີ 2023. ພ້ອມນີ້, ທ່ານຍັງໄດ້ຮຽກຮ້ອງມາຍັງບັນດາສະມາຊິກສະພາແຫ່ງຊາດ ຈົ່ງເພີ່ມທະວີຄວາມສາມັກຄີ, ຍົກສູງຄວາມຮັບຜິດຊອບແລະເສີມຂະຫຍາຍສະຕິປັນຍາ ເຂົ້າໃນການຄົ້ນຄວ້າປະກອບຄຳຄິດຄຳເຫັນ ຕໍ່ເນື້ອໃນຕ່າງໆໃຫ້ເລິກເຊິ່ງ ແນໃສ່ການກຳນົດທິດທາງແຜນການໃນຕໍ່ໜ້າໃຫ້ສອດຄ່ອງຕາມພາລະບົດບາດ, ໃຫ້ໄດ້ຮັບຜົນ ແລະ ຖືກຕ້ອງສອດຄ່ອງກັບສະພາບຕົວຈິງ.

ຈາກນັ້ນ, ທ່ານ ພົອ. ວິໄຊທໍ່ ເພຍຫຼວງ ຈົ່ງເສີ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ໄດ້ລາຍງານການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການ 2023 ຕະຫຼອດໄລຍະ 1 ປີ ຜ່ານມາ ຄະນະສະມາຊິກສະພາແຫ່ງຊາດ ໃນນາມເປັນຕົວແທນແຫ່ງສິດຜົນປະໂຫຍດຂອງປະຊາຊົນ ໄດ້ປະກອບສ່ວນຢ່າງຕັ້ງໜ້າໃນການສ້າງລັດປະຊາທິປະໄຕ ໃຫ້ກາຍເປັນລັດຄຸ້ມຄອງເທື່ອລະກ້າວ ເປັນຕົ້ນແມ່ນການເຄື່ອນໄຫວໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະ ມະຕິກອງປະຊຸມສະພາແຫ່ງຊາດໃຫ້ແກ່ຜູ້ມີສິດເລືອກຕັ້ງຕາມຂອບເຂດຄວາມຮັບຊອບຂອງຕົນ ໄດ້ເຂົ້າຮ່ວມການສ້າງ, ທາບທາມ, ປັບປຸງ, ພິຈາລະນາ ແລະ ຮັບຮອງເອົາກົດໝາຍ ໄດ້ 21 ສະບັບ, ສຳລັດການທາບທາມຮ່າງກົດໝາຍ ໄດ້ຈຳນວນ 22 ສະບັບ, ໄດ້ປະເມີນການຈັດຕັ້ງປະຕິບັດກົດໝາຍ ໄດ້ 4 ສະບັບ. ນອກຈາກນີ້, ຍັງໄດ້ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງຂໍຄວາມເປັນທຳ, ກົດໝາຍວ່າດ້ວຍຢາເສບຕິດ ແລະ ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຢາເສບຕິດໃນ 5 ເມືອງ ແລະ ຍັງໄດ້ເຄື່ອນໄຫວວຽກງານກັບຕ່າງປະເທດ ຢ່າງແຂງແຮງ ສ່ວນວຽກງານດ້ານອື່ນໆ ກໍໄດ້ມີການຈັດຕັ້ງປະຕິບັດ ແລະ ມີຜົນສຳເລັດ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ຍັງໄດ້ພ້ອມກັນຄົ້ນຄວ້າ ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບ ພ້ອມທັງໄດ້ຮັບຟັງການຜ່ານຮ່າງມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການ 2023 ຕື່ມອີກ.

(ແສງຕາວັນ ລັດຕະນະວົງ)




# ກົດໝາຍ ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

**ມາດຕາ 45 ອາຍຸການຂອງໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ມີອາຍຸການບໍ່ໃຫ້ເກີນ ສາມປີ ຕາມແຕ່ລະປະເພດທຸລະກິດ ແລະ ສາມາດຕໍ່ໄດ້.

**ມາດຕາ 46 ການໂຈະການດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ການດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ດຳເນີນທຸລະກິດບໍ່ຖືກຕ້ອງຕາມ ຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
2. ສ້າງຄວາມເສຍຫາຍຕໍ່ ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
3. ບໍ່ປະຕິບັດພັນທະທາງດ້ານການເງິນ;
4. ບໍ່ປະຕິບັດຕາມແຜນການປ້ອງກັນ ແລະ ແກ້ໄຂອຸປະຕິເຫດ;
5. ມີການລະເມີດ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 47 ການຖອນໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ຈະຖືກຖອນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ປັບປຸງແກ້ໄຂ ຕາມສາເຫດທີ່ມີການໂຈະ ພາຍຫຼັງທີ່ໄດ້ມີການແຈ້ງເຕືອນແລ້ວ;
2. ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
3. ລະເມີດ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຢ່າງຮ້າຍແຮງ.

**ມາດຕາ 48 ສິດຂອງຜູ້ດຳເນີນທຸລະກິດກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ມີສິດ ດັ່ງນີ້:

1. ເຄື່ອນໄຫວຕາມການອະນຸຍາດໃຫ້ດຳເນີນທຸລະກິດ;
2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ສະເໜີໂຈະ ຫຼື ຢຸດເຊົາການດຳເນີນທຸລະກິດຂອງຕົນ;
4. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ;
5. ຮ້ອງທຸກກ່ຽວກັບການລະເມີດສິດຂອງຕົນ ໃນການດຳເນີນທຸລະກິດ;
6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 49 ພັນທະຂອງຜູ້ດຳເນີນທຸລະກິດກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ມີພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳຢ່າງເຂັ້ມງວດ;
2. ເສຍ ພາສີ, ອາກອນ ແລະ ປະຕິບັດພັນທະອື່ນໃຫ້ແກ່ລັດຕາມກົດໝາຍ ແລະ ລະບຽບການ;
3. ສ້າງຕັ້ງໜ່ວຍງານຄຸ້ມຄອງວຽກງານ ວັດຖຸລະເບີດທາງອຸດສາຫະກຳ;
4. ຝຶກອົບຮົມຄວາມຮູ້ດ້ານຄວາມປອດໄພ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ໃຫ້ພະນັກງານ ແລະ ກຳມະກອນໃນຫົວໜ່ວຍທຸລະກິດຂອງຕົນ;
5. ສ້າງແຜນການນຳໃຊ້ວັດຖຸລະເບີດທາງອຸດສາຫະກຳປະຈຳປີ;
6. ສ້າງ ແລະ ພັດທະນາແຜນປ້ອງກັນ ແລະ ມາດຕະການແກ້ໄຂອຸບປະຕິເຫດ;
7. ເກັບຮັກສາ ແລະ ສ້າງຖານຂໍ້ມູນ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ;
8. ສະໜອງຂໍ້ມູນ ແລະ ຄຳແນະນຳດ້ານຄວາມປອດໄພ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ;
9. ທຳລາຍວັດຖຸລະເບີດທາງອຸດສາຫະກຳ ທີ່ເສື່ອມຄຸນນະພາບ ໝົດອາຍຸການນຳໃຊ້ ແລະ ສິ່ງເສດເຫຼືອຂອງວັດຖຸລະເບີດດັ່ງກ່າວ;
10. ຮຽກຄືນ ຜະລິດຕະພັນວັດຖຸລະເບີດທາງອຸດສາຫະກຳ ທີ່ບໍ່ໄດ້ມາດຕະຖານ;
11. ເກັບກູ້ ແລະ ສົ່ງຄືນ ວັດຖຸລະເບີດ ທີ່ເຫຼືອໃຊ້ຢູ່ໃນໂຄງການ;
12. ຮັບຜິດຊອບຕໍ່ຜົນເສຍຫາຍ ແລະ ຄ່າໃຊ້ຈ່າຍທັງໝົດທີ່ເກີດຈາກການດຳເນີນທຸລະກິດຂອງຕົນ;
13. ອຳນວຍຄວາມສະດວກແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງໃນການປະຕິບັດໜ້າທີ່;
14. ສະຫຼຸບ ແລະ ລາຍງານການດຳເນີນທຸລະກິດຂອງຕົນ ໃຫ້ຂະແໜງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;
15. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 50 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຊື້ ຂາຍ, ແລກປ່ຽນ, ນຳເຂົ້າ-ສົ່ງອອກ, ຊຸກເຊື່ອງ, ຄອບຄອງ, ນຳໃຊ້, ທຳລາຍ ອາວຸດ ແລະ ວັດຖຸລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳໃຊ້ ອາວຸດ ແລະ ວັດຖຸລະເບີດ ເຂົ້າໃນການລ່າສັດປ່າ, ສັດນ້ຳ ແລະ ອື່ນໆ;
3. ນຳໃຊ້ອາວຸດພື້ນເມືອງໂດຍບໍ່ຖືກຕ້ອງຕາມກົດໝາຍ;
4. ດຳເນີນທຸລະກິດ ກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;
5. ນຳເຂົ້າ, ນຳໃຊ້ ຫຼື ມີໄວ້ຄອບຄອງ ວັດຖຸລະເບີດ, ອາວຸດເຄມີ, ຊີວະພາບ ແລະ ນິວເຄຼຍ;
6. ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ນຳໃຊ້ດອກໄມ້

ອ່ານຕໍ່ສະບັບໜ້າ...

# ວິທີເຮັດວຽກ




ຂ) ພະຍາດໃຈແຄບ: ພະຍາດຊະນິດນີ້ເປັນອັນຕະລາຍທີ່ສຸດ; ແຕ່ວ່າພະນັກງານ ແລະ ສະມາຊິກພັກເຮົາຫຼາຍຄົນຍັງຕິດແປດພະຍາດຊະນິດນີ້ຢູ່.

**ທາງພາຍໃນ:** ພະຍາດຊະນິດນີ້ ກີດຂວາງຄວາມເປັນເອກະພາບ ແລະ ສາມັກຄີຂອງພັກ.

**ທາງພາຍນອກ:** ພະຍາດຊະນິດນີ້ ມ້າງເພຄວາມສາມັກຄີໃນໝູ່ປະຊາຊົນ.

ມີຫຼາຍພະຍາດຄື: ລັດທິທ້ອງຖິ່ນ, ລັດທິຊັ້ນຕຳແໜ່ງ, ລັດທິເອກະຊົນ, ລັດທິມັກຊື່ສຽງ, ມັກຍົດສັກ, ຢຽບຢ່ຳຜູ້ດີຂອງຕົນລົງ, ລັດທິຫຼິ້ນກິນເລີະເຊີະ ແລະອື່ນໆນັ້ນ ກໍລ້ວນແຕ່ເກີດມາຈາກພະຍາດໃຈແຄບນີ້ໝົດ.

ມີພະນັກງານບາງຄົນ ເຫັນແຕ່ປະໂຫຍດພັກພວກຂອງຕົນ, ບໍ່ເຫັນປະໂຫຍດຂອງໝົດທັງໝູ່, ຢາກເອົາປະໂຫຍດຂອງໝົດທັງໝູ່ໄປຂຶ້ນກັບພັກພວກຂອງຕົນ ເຂົາລືມລະບອບປະຊາທິປະໄຕລວມໝູ່ໝົດກ້ຽງ. ເຂົາລືມເສຍວ່າສ່ວນໜ້ອຍຕ້ອງຂຶ້ນກັບສ່ວນຫຼາຍ, ຊັ້ນຕ່ຳຕ້ອງຂຶ້ນກັບຊັ້ນສູງ, ພາກສ່ວນຕ້ອງຂຶ້ນກັບໝົດໝູ່.

ພວກເຮົາຕ້ອງເດັດດ່ຽວແກ້ໄຂດັດແປງພະຍາດອັນນີ້. ແຕ່ລະສະມາຊິກ, ແຕ່ລະພາກສ່ວນ, ແຕ່ລະຄວາມເວົ້າ, ແຕ່ລະວຽກທີ່ເຮັດ ຕ້ອງລ້ວນແຕ່ແນໃສ່ເຮັດປະໂຫຍດໃຫ້ໝົດທັງປະເທດ, ໃຫ້ໝົດທັງພັກ.

ຍ້ອນວ່າໂລພາ ຢາກໄດ້ຊື່ສຽງຖານະ, ດັ່ງນັ້ນ ເວລາຮັບຜິດຊອບວຽກງານໃນພາກສ່ວນໃດພາກສ່ວນໜຶ່ງ ຈຶ່ງມັກແກ່ເອົາຜູ້ນັ້ນ, ດຶງເອົາຜູ້ນີ້ ມັກຜູ້ໃດກໍແກ່ເອົາມາເຂົ້າ, ຊັງຜູ້ໃດກໍຊອກວິທີຊຸກອອກ. ດັ່ງນັ້ນ, ເພິ່ນເອີ້ນວ່າ ຮູ້ວ່າມີແຕ່ຕົວເອງ, ຮູ້ວ່າມີແຕ່ພາກສ່ວນຂອງຕົນ, ຈົນລືມຮອດພັກ, ນັ້ນແມ່ນອັນໜຶ່ງຂອງພະຍາດໃຈແຄບ ມັນຝືນກັບຫຼັກການລວມສູນ ແລະ ເອກະພາບຂອງພັກ.

ເມື່ອຊັ້ນສູງສົ່ງພະນັກງານລົງໄປທ້ອງຖິ່ນ, ພະນັກງານທ້ອງຖິ່ນ ເລີຍບໍ່ສາມັກຄີສະໜິດສະໜົມນຳ ກໍແມ່ນຍ້ອນພະຍາດໃຈແຄບ ອັນນີ້ຄືກັນ.

ພວກເຮົາ ຕ້ອງຮູ້ໄວ້ວ່າ ມີແຕ່ໃຫ້ພະນັກງານສອງຊະນິດນີ້ ສາມັກຄີກັນ ແລະ ມີແຕ່ໃຫ້ພະນັກງານທ້ອງຖິ່ນນັບມື້ນັບຫຼາຍຂຶ້ນ ຈຶ່ງຈະເຮັດໃຫ້ພື້ນຖານຂອງພັກຂະຫຍາຍຕົວອອກ ແລະ ໝັ້ນຄົງໄດ້. ພະນັກງານທີ່ຊັ້ນສູງສົ່ງລົງມານັ້ນ ຕາມທຳມະດາມັກມີລະດັບຄວາມຮູ້ສູງກວ່າ, ມີບົດຮຽນຫຼາຍກວ່າ, ແຕ່ວ່າພະນັກງານທ້ອງຖິ່ນຊ້ຳພັດຮູ້ຈັກປະຊາຊົນດີກວ່າ, ລຶ້ງເຄີຍກັບວຽກງານກວ່າ, ພະນັກງານສອງຊະນິດນີ້ ຕ້ອງຊ່ວຍເຫຼືອກັນ, ເອົາຄວາມສາມາດປະສົມປະສານເພີ່ມເຕີມໃສ່ກັບວຽກການຈຶ່ງແລ່ນດີ.

ອ່ານຕໍ່ສະບັບໜ້າ...




# ແກວ່ງຄ້ອນກາຍໝາກມ່ວງ

\# ຄົ້ນກົບເມກ

ສຸພາສິດລາວທີ່ເປັນຄຳເວົ້າປົດສະໜາເຕືອນໃຈໃຫ້ຄົ້ນຄິດນັ້ນ ມັນໄດ້ກວມເອົາຫຼາຍແງ່ມູມຂອງສັງຄົມ ສາມາດເລືອກຮັບເອົາມາປັບປະຍຸກໃຊ້ເປັນບົດຮຽນໃນຊີວິດ ແລະ ໜ້າວຽກໂຕຈິງ. ບໍ່ດັ່ງນັ້ນ, ອາດຈະສາມາດເຮັດໃຫ້ຜູ້ຄົນທີ່ຢາກກິນແຕ່ໝາກມ່ວງພາດທ່າເພພັງເພາະການໃຊ້ຄ້ອນ ກໍຜິດເລີຍບໍ່ໄດ້ໝາກມ່ວງ; ການນຳໃຊ້ຄົນຜິດພາດບໍ່ໄດ້ບັນລຸເປົ້າໝາຍ; ສຸພາສິດບູຮານລາວຂອງເຮົາປະສານໃສ່ກັບຄ້ອນ ຖ້າວ່າຜູ້ກ່ຽວໄດ້ໄມ້ຄ້ອນຜຸ ຫຼື ຄ້ອນທີ່ມັນໂດກ ແກວ່ງໄປຄ້ອນຫັກກະມີ ຫຼື ແກວ່ງໄປນ້ຳໜັກບໍ່ເຖິງ ກໍພາໃຫ້ບໍ່ຮອດຈຸດໝາຍ.

ຄືໝາກມ່ວງທີ່ຢາກໄດ້ເຊິ່ງສາມາດທຽບໄດ້ກັບການນຳໃຊ້ຄົນເຂົ້າໃສ່ວຽກງານ ຖ້າວ່າຜູ້ມີອຳນາດຕັດສິນໃຈນຳໃຊ້ຜິດຄົນ ກໍອາດພາໃຫ້ໜ້າທີ່ວຽກງານບໍ່ສຳເລັດ ເພາະສີມືບໍ່ເຖິງໜ້າວຽກ; ພວກເຮົາອາດເຄີຍເຫັນບາງຄົນແຕ່ງໂຕຖ່ວງດຶງຄວາມກ້າວໜ້າຂອງໜ່ວຍງານ ບາງບ່ອນພະນັກງານນ້ອຍກໍໄດ້ແຕ່ຈົ່ມໃນໃຈວ່າ ໃຊ້ຄົນສີມືບໍ່ເຖິງວຽກ ເສຍງົບປະມານຊື່ໆ. ສຸພາສິດບູຮານ ຈຶ່ງເວົ້າເຕືອນເນັ້ນໄວ້ວ່າ: ຖ້າວ່າເຮົາຢາກໄດ້ໝາກມ່ວງ ກໍຕ້ອງຮູ້ລະດັບສູງຕ່ຳ ຮູ້ໄມ້ຄ້ອນວ່າມັນພໍດີຈະແກວ່ງເຖິງຫຼືບໍ່? ບາງກໍລະນີກະຕວງຜິດພາດຢ່າງມະຫັນ ເວລາແກວ່ງຄ້ອນໄປຈຶ່ງກາຍໝາກມ່ວງທີ່ຢາກໄດ້.

ຜູ້ຂຽນເຫັນວ່າ: ການ



ເຖິງແມ່ນເວົ້າສັ້ນ ແຕ່ກິນຄວາມໝາຍທັງເລິກ ແລະ ກວ້າງ.

ແກວ່ງຄ້ອນກາຍໝາກມ່ວງ ໄດ້ເຊື່ອງຊ້ອນແງ່ຄິດໄວ້ຫຼາຍມູມມອງເຊັ່ນ: ບາດກ້າວການເລືອກໃຊ້ຄ້ອນ ແລະ ເປົ້າໝາຍຄື ໝາກມ່ວງ ຂະນະດຽວກັນ ກໍຕ້ອງໄດ້ຊັ່ງຊາກຳລັງແຮງດີ ຖານະດີ; ວຸດທິການສຶກສາສູງ ແຕ່ບາດໃຊ້ວຽກຕົວຈິງພັດບໍ່ຮູ້ຊິເຮັດ ເພາະຄວາມຮູ້ແທ້ບໍ່ແໜ້ນ, ບາງກໍລະນີຂາດທັງປະສົບການ.

ການນຳໃຊ້ຄົນຜິດພາດບໍ່ພຽງແຕ່ບໍ່ໄດ້ວຽກ, ບາງກໍລະນີພາໃຫ້ວຽກຊັກຊ້າ; ກົດໜ່ວງນຳໃຊ້ຄົນໃຫ້ເຂົ້າກັບໜ້າວຽກເປັນບັນຫາຕັດສິນຄວາມກ້າວໜ້າຂອງໜ່ວຍງານ ບໍ່ແມ່ນເລືອກຄົນຖືກໃຈ ຕ້ອງເລືອກຄົນໃຫ້ຖືກວຽກ ບໍ່ດັ່ງນັ້ນ ຄືຊິບໍ່ຕ່າງກັບ ຖາກໄມ້ບໍ່ມີຫຼັ່ງຮຽມເຄົ້າ ແສນຊິກ້ຽງກໍບໍ່ງາມ...

ສະເໜີແລກປ່ຽນ.

# ການທຳບຸນປ່ອຍສັດ

\# ໂດຍ: ຫຼານລຸງຊາດ

ປັດຈຸບັນເປັນທີ່ໜ້າເສົ້າໃຈຫຼາຍ, ເມື່ອພົບເຫັນພາບສັດສາວາສິ່ງຫຼາຍຊີວິດຖືກກັກຂັງ, ຍັ່ງຢາຍ, ຫ້ອຍເປັນສາຍຕາມຕູບນ້ອຍໜ້າວັດ ຫຼື ສະຖານທີ່ທາງພິທີກຳຕ່າງໆ ທີ່ລໍຖ້າມະນຸດມາໂຜດຊີວິດ ເພື່ອກັບຄືນສູ່ທຳມະຊາດ ເຫັນແລ້ວໜ້າສັງເວດໃຈ ແລະ ເຮັດໃຫ້ມີຄຳຖາມເກີດຂຶ້ນວ່າ ມັນຍຸດຕິທຳແລ້ວບໍ? ຕໍ່ກັບສັດເຫຼົ່ານັ້ນ ທີ່ຖືກໃຊ້ເປັນເຄື່ອງມືທາງການຄ້າ ແລະ ພິທີກຳຕ່າງໆ ຈາກທີ່ເຄີຍອາໄສຢູ່ທຳມະຊາດ ກໍຖືກຈັບມາເປັນເຄື່ອງມືມະນຸດ ເພື່ອໃຊ້ແລກປ່ຽນ ຖ້າໂຊກດີກໍຖືກຊື້ໄປປ່ອຍ, ໂຊກບໍ່ດີກໍອາດຕາຍກ່ອນຖືກປ່ອຍ ຫຼື ອາດຈະຖືກນຳໄປປ່ອຍບ່ອນທີ່ບໍ່ແມ່ນສະພາບທີ່ເຄີຍຢູ່ ແລ້ວກໍຕາຍໃນທີ່ສຸດ.

ການປ່ອຍສັດ ຫຼື ໂຜດສັດ ເປັນປະເພນີນິຍົມຂອງຊາວພຸດ ທີ່ປະຕິບັດສືບທອດກັນມາແຕ່ດົນນານ ໂດຍມີຄວາມເຊື່ອວ່າຈະເປັນການຕໍ່ອາຍຸ, ເຮັດໃຫ້ຫາຍຈາກອາການເຈັບປ່ວຍ, ປັດເປົ່າສິ່ງຊົ່ວຮ້າຍ ແລະ ຮັບເອົາໂຊກໄຊທັງຫຼາຍເຂົ້າມາໃນຊີວິດ ເຊິ່ງການກະທຳດັ່ງກ່າວຖືເປັນຮີດຄອງທີ່ປະຕິບັດກັນມາຫຼາຍເຊັ່ນຄົນ ໂດຍອີງຕາມຫຼັກສາສະໜາພຸດ ຄືປະການທີໜຶ່ງແມ່ນຖືກຕ້ອງຕາມສິນ 5 ຂອງສາສະໜາພຸດ ກໍຄືສິນຂໍ້ທີ 1 ໝາຍເຖິງການລະເວັ້ນຈາກການຂ້າຊີວິດສັດທຸກຊະນິດ ແລະ ການໃຫ້ຊີວິດໃໝ່ຂອງທຸກໆຊີວິດ ກໍຖືເປັນບຸນອັນຍິ່ງໃຫຍ່, ປະການທີສອງຄືບຸນຈາກການໃຫ້ທານ (3 ລຳດັບອານິສົງຂອງການທຳບຸນ: 1. ການໃຫ້ທານ, 2. ການນັບຖືສິນ, 3. ການຈະເລີນພາວະນາ); ການທຳບຸນ ມີ 3 ຂັ້ນ ໂດຍຕ້ອງຮັບປະກັນທັງກ່ອນ, ປັດຈຸບັນ ແລະ ຫຼັງການກະທຳ ທີ່ບໍ່ແມ່ນການບຽດບຽນສິ່ງທີ່ມີຊີວິດ; ການທຳບຸນສາມາດເຮັດໄດ້ຫຼາຍວິທີແຕກຕ່າງອອກໄປ ແຕ່ຈະເຮັດແນວໃດເພື່ອບໍ່ໄປກະຕຸ້ນປະລິມານການລ່າໃຫ້ເພີ່ມເພີ່ມຂຶ້ນ ເພື່ອມາປ້ອນໃຫ້ຮ້ານນ້ອຍທີ່ກະແຈກກະຈາຍຕາມສະຖານທີ່ຕ່າງໆ ເພາະຖ້າມີອຸປະສົງ ກໍໃຫ້ເກີດມີອຸປະທານຕາມມາດຕະເກນຄູ່ຂອງສັງຄົມ. ດັ່ງນັ້ນ,ຈຶ່ງຢາກຂໍຝາກປາກົດການໜຶ່ງໃຫ້ສັງຄົມ ແລະ ຊາວພຸດທັງຫຼາຍໄດ້ພິຈາລະນາ ແລະ ເປັນແງ່ຄິດນຳກັນ ດັ່ງຕໍ່ໄປນີ້:

1. ການຊື້-ຂາຍ ສັດຢູ່ສະຖານທີ່ວັດວາອາຮາມ ຖືວ່າເປັນບ່ອນເໝາະສົມຫລືບໍ? ວັດຄວນເປັນສະຖານທີ່ງຽບສະຫງົບ ປາສະຈາກສຽງດັງລົບກວນ;

2. ທຸລະກິດດັ່ງກ່າວຄວນຖືກຈຳກັດສະເພາະແຕ່ບໍລິເວນຕະຫຼາດ ທີ່ຖືວ່າເປັນສູນລວມຂອງການຊື້-ຂາຍ ເທົ່ານັ້ນດີບໍ? ທັງນີ້ ກໍເພື່ອງ່າຍໃນການຮັກສາອະນາໄມ ແລະ ຄຸ້ມຄອງລາຄາສິນຄ້າຂອງເຈົ້າໜ້າທີ່ຮັບຜິດຊອບ.

3. ການໃຫ້ຂໍ້ມູນແກ່ລູກຄ້າ ຂອງຊາວຄ້າຂາຍ ຄວນຈະເປັນການແນະນຳ ຫຼັກການວິທີປ່ອຍຢ່າງຖືກຕ້ອງ, ລັກສະນະສະຖານທີ່ປ່ອຍທີ່ເໝາະສົມກັບທຳມະຊາດຂອງສັດແຕ່ລະຊະນິດ ແລະ ເປັນມິດຕໍ່ລະບົບນິເວດ (ຕົວຢ່າງຄວນໃຫ້ສັດໄດ້ລຶ້ງກັບນ້ຳ ຫຼື ສະຖານທີ່ໃໝ່ນັ້ນກ່ອນ ໂດຍຄ່ອຍຕື່ມນ້ຳໃສ່ເທື່ອລະໜ້ອຍກ່ອນຈະປ່ອຍລົງ).

4. ຄວນມີຂໍ້ກຳນົດກົດລະບຽບໃນການປັບໃໝຕໍ່ຜູ້ລະເມີດ ເພື່ອເປັນບັນທັດຖານດັດສົມສັງຄົມດີບໍ?

ທ້າຍນີ້, ຜູ້ຂຽນຢາກນຳສະເໜີກ່ຽວກັບການປ່ອຍສັດແຕ່ລະຊະນິດ ສູ່ທຳມະຊາດແນວໃດໃຫ້ໄດ້ບຸນສູງສຸດ ເພື່ອເປັນທຳມະທານແກ່ຜູ້ອ່ານໄດ້ຮັບຮູ້ ແລະ ນຳໃຊ້ໃຫ້ເກີດປະໂຫຍດໃນຄັ້ງຕໍ່ໄປ ແລະ ທັງຮັບປະກັນການປ່ອຍໃຫ້ເປັນມິດຕໍ່ລະບົບນິເວດ ແລະ ເພື່ອຮັບປະກັນຄວາມຢູ່ລອດຂອງສັດ ເພາະສັດແຕ່ລະປະເພດມີສະພາບແວດລ້ອມທີ່ແຕກຕ່າງກັນ ດັ່ງນີ້:

- ເຕົ່າ: ຄວນປ່ອຍໃນນ້ຳຂັງທີ່ສະອາດ, ນ້ຳຕົ້ນ, ດິນຕົມ (ຫ້າມປ່ອຍໃນກະແສນ້ຳທີ່ໄຫຼແຮງ);
- ອ່ຽນ, ປາ, ງູ: ໃນນ້ຳຕື້ນ, ດິນຕົມ, ນ້ຳໄຫຼຄ່ອຍ ເຊັ່ນ: ຫ້ວຍ, ໜອງ, ນາ; (ປາບາງຊະນິດອາດມີສະພາບແວດລ້ອມອາໄສທີ່ຕ່າງກັນ ດັ່ງນັ້ນ, ຄວນສຶກສາໃຫ້ລະອຽດກ່ອນ);
- ຫອຍ, ກົບ: ຫ້ວຍ, ໜອງ, ບຶງ (ຄ່ອຍໆປ່ອຍ ຫ້າມໂຍນໄປກາງນ້ຳຈະເຮັດໃຫ້ຫອຍຕາຍ);
- ນົກ: ພູຜາ, ປ່າດົງ ຫ່າງໄກຈາກສິ່ງວົນແຊວລົບກວນ;




## ໂສດາ

ໂສດາ ແປວ່າກະແສນ້ຳ, ກະແສແຫ່ງອະລິຍະທຳ ຂັ້ນຕົ້ນ ຫລື ຊັ້ນ... ຜູ້ເຂົ້າເຖິງອະລິຍະທຳນີ້ ເອີ້ນວ່າ "ພະໂສດາບັນ", ໃນຄຳວ່າໂສດາບັນນັ້ນ ຄືຜູ້ບັນລຸທຳຂັ້ນໂສດາ ຫລືຜູ້ເຖິງໂສດາ ຍັງມີຄຳວ່າໂສດາປະຕິມັກ ແມ່ນຫລັກທຳ ຫລືທາງປະຕິບັດ ເພື່ອໃຫ້ສຳເລັດເປັນພະໂສດາບັນ.

ໂສດາບັນ ຍັງແປວ່າ ຍິນດີ ຫລືພໍໃຈ ເຊັ່ນຄຳວ່າ:

-ໃຈບໍ່ໂສດາດ້ວຍ ເວົ້າແມ່ນກໍເປັນຜິດ

-ໃຈບໍ່ໂສດາຄອມ ປາກດີກໍເປັນຮ້າຍ

ໂສດາ ຍັງແມ່ນຊື່ນ້ຳຫວານຊະນິດໜຶ່ງ ທີ່ຜະລິດຈາກໂຮງງານ ມີສີໃສ ມີລົດຂື່ນໆໃຊ້ປຸງກັບເຫລົ້າວິສະກີ.

ໃນຄຳວ່າໂສດາ ແລະ ໂສດາບັນ ເປັນພາສາບາລີ ພາສາຂອງຄົນອິນເດຍໃຕ້ ສ່ວນໂສດາອື່ນໆນັ້ນ ອາດຈະເປັນພາສາລາວກໍໄດ້.



## ຂຽນຄຳລາວໃຫ້ຖືກ

\# ຄູແສງ

| ພິມຖືກ | ພິມຜິດ |
|---|---|
| ກວ່າ | ກ່ວາ |
| ກວ້າງ | ກ້ວາງ |
| ຄວ້າ | ຄ້ວາ |
| ຄົ້ນຄວ້າ | ຄົ້ນຄ້ວາ |
| ອວ່າຍ | ອ່ວາຍ |
| ໃຫຍ່ | ໃຫ່ຍ |
| ໄຫວ້ | ໄຫ້ວ |
| ໄຫວ່ | ໄຫ່ວ |
| ຫວ່າງ | ຫ່ວາງ |



## ສຸກສະບາຍຫາຍໂຣຄາ

# ຮ່ອງເຕ້ຊິນໂດມ ຫຼື ພາວະເດັກເອົາແຕ່ໃຈ

**ແປ ແລະ ຮຽບຮຽງໂດຍ: ທິວກະທິ**



ຮ່ອງເຕ້ຊິນໂດມ ຫຼື ພາວະເດັກເອົາແຕ່ໃຈ (Rich Kid Syndrome) ແມ່ນໂລກທີ່ເກີດໃນເດັກນ້ອຍທີ່ໄດ້ຮັບການເບິ່ງແຍງດູແລໃນສະພາບແວດລ້ອມທີ່ໄດ້ຮັບການປົກປ້ອງຫຼາຍຈົນເກີນໄປ ແລະ ໄດ້ຮັບການຊົດເຊີຍຄວາມຮັກຄວາມໃສ່ໃຈຂອງພໍ່ແມ່ດ້ວຍສິ່ງຂອງ; ຄວາມຮັ່ງມີຂອງຄອບຄົວບໍ່ແມ່ນປັດໃຈທີ່ພາໃຫ້ເກີດໂລກນີ້ ແຕ່ເປັນວິທີການລ້ຽງລູກຂອງແຕ່ລະຄອບຄົວທີ່ເປັນປັດໃຈສຳຄັນໃຫ້ເກີດມີໂລກດັ່ງກ່າວ.

ຜູ້ທີ່ເປັນພະຍາດນີ້ມັກຈະສະແດງພຶດຕິກຳອອກມາໃນຮູບແບບເອົາແຕ່ໃຈ ເຊິ່ງເດັກກຸ່ມນີ້ມັກຈະເຊື່ອວ່າຕົນເອງມີສິດໄດ້ຮັບທຸກສິ່ງທຸກຢ່າງຕາມທີ່ເຂົາຕ້ອງການ ໂດຍບໍ່ຕ້ອງຂໍອະນຸຍາດກ່ອນ ເດັກທີ່ມີພາວະນີ້ມັກຈະເປັນເດັກຂີ້ຄ້ານ, ບໍ່ມີຄວາມອົດທົນ, ບໍ່ມັກຄວາມຫຍຸ້ງຍາກ ແລະ ບໍ່ຮູ້ຈັດການໂຕເອງ ຖ້າບໍ່ໄດ້ຮັບສິ່ງທີ່ເຂົາຕ້ອງການ ພວກເຂົາມີຄວາມເປັນໄປໄດ້ຫຼາຍທີ່ຈະສະແດງຄວາມຮຸນແຮງ ແລະ ສະແດງຄວາມໂມໂຫ ເມື່ອເຂົາບໍ່ໄດ້ສິ່ງທີ່ຕ້ອງການ.

ຮ່ອງເຕ້ຊິນໂດມເກີດຈາກການລ້ຽງເດັກທີ່ຕາມໃຈຫຼາຍເກີນໄປ, ພໍ່ແມ່ຕອບສະໜອງຄວາມຕ້ອງການຂອງເດັກຕະຫຼອດເວລາ, ບໍ່ໃຫ້ເດັກພົບກັບຄວາມຜິດຫວັງ, ບໍ່ເຄີຍລົງໂທດ ເມື່ອເດັກເຮັດຜິດ ເຖິງວ່າເດັກຈະເຮັດຜິດ ຫຼື ມີພຶດຕິກຳບໍ່ເໝາະສົມກໍຕາມ; ຮ່ອງເຕ້ຊິນໂດມຈະສົ່ງຜົນໄລຍະຍາວຕໍ່ເດັກຄື:

- ຂາດຄວາມນັບຖືໂຕເອງ ເພາະໄດ້ໃນສິ່ງທີ່ຕົນເອງຕ້ອງການຢ່າງງ່າຍດາຍ ໂດຍບໍ່ຕ້ອງມີຄວາມພະຍາຍາມຫຍັງ ຈຶ່ງບໍ່ມີຄວາມພູມໃຈໃນໂຕເອງ.
- ບໍ່ຮູ້ຈັກຄວບຄຸມ ແລະ ຈັດການກັບອາລົມຂອງຕົນເອງ ເມື່ອຮູ້ສຶກຜິດຫວັງຈະມີອາການຊຶມເສົ້າ, ໃຈຮ້າຍ ຫຼື ອາດຈະສະແດງພຶດຕິກຳຮຸນແຮງຕໍ່ກັບຜູ້ອື່ນ ເພາະບໍ່ລຶ້ງເຄີຍກັບການຍອມຮັບຄວາມຕ້ອງການຂອງຄົນອື່ນ.
- ມີຄວາມອົດທົນຕ່ຳ ບໍ່ມັກຄວາມຫຍຸ້ງຍາກ, ບໍ່ມັກລໍຄອຍ ເພາະລຶ້ງກັບການໄດ້ຮັບການຕອບສະໜອງຢ່າງໄວວາຈາກພໍ່ແມ່.
- ແຂງກະດ້າງ ເພາະບໍ່ຮູ້ຈັກຄວບຄຸມອາລົມຂອງຕົນເອງ ແລະ ຄິດພຽງວ່າຄວາມຄິດຂອງຕົນເອງຖືກຕ້ອງສະເໝີ, ຂາດຄວາມເຄົາລົບຕໍ່ຜູ້ອື່ນທີ່ຄິດບໍ່ຄືກັບຕົນເອງ.
- ມີໂອກາດທີ່ຈະຕິດເຫຼົ້າ ແລະ ຢາເສບຕິດໄດ້ງ່າຍ.
- ຜົນການຮຽນບໍ່ດີ ເພາະເດັກໃນພາວະນີ້ຈະບໍ່ມີເປົ້າໝາຍໃນຊີວິດ.
- ບໍ່ມັກຢູ່ໃນກົດລະບຽບ ຫຼື ຂໍ້ຈຳກັດໃດໆ ສົນໃຈແຕ່ຄວາມຕ້ອງການຂອງຕົນເອງ, ບໍ່ມີຄວາມເຂົ້າໃຈເຫດ ແລະ ຜົນຂອງສິ່ງຕ່າງໆ.
- ເຫັນຕົນເອງເປັນສູນກາງຂອງສັງຄົມ ຕ້ອງໄດ້ຮັບສິ່ງທີ່ຕ້ອງການຕະຫຼອດເວລາ.




## ມອງມຸມດຽວ

**# ໂດຍ: ໂອທອງ ຄຳອິນຊູ**

✻ ຢືນຢູ່ ຫົວເລກເກົ້າ
ແລ້ວເລົ່າ ເລີຍກຸມຖຽງ
ທັງເລົ່າ ຊູຊີໃຫ້
ໃຜວ່າ ເປັນເລກເກົ້າ
ຫາວ່າເປັນຫົກ
ວ່າຕົນເຫັນແຈ້ງ
ຫຼາຍຄົນຍອມເຊື່ອ
ກຸມຮ້າຍໃສ່ເຂົາ

✻ ແນວບໍ່ ລອງຍ່າງອ້ອມ
ແນວບໍ່ມາຢືນທາງ
ເຫັນແຕ່ ມຸມດຽວແລ້ວ
ເຊື່ອວ່າ ຕົນຖືກຕ້ອງ
ວຽນຮອບຫຼາຍທີ່ນ
ສ່ວນຫາງຂອງເກົ້າ
ຢືນຢັນເລີຍໂລດ
ຖຽງຖ້ອຍບໍ່ຖອຍ

✻ ຖຽງດົນຫຼາຍປວດຂີ້
ປົດທຸກຈົນມີແຮງ
ຍ່າງຫຼີງມຸມມາໃກ້
ໃຜລັກເອົາເລກເກົ້າ
ເລີຍຍ່າງໄປວົດ
ສວ່າງສະບາຍເບົາທ້ອງ
ທາງຫາງເຫັນຕ່າງ
ວາງໄວ້ປ່ຽນແທນ ຜັດວ່າ!

✻ ຕອນກູເຫັນກ່ອນນີ້
ສັງວ່າ ມາຮວມຫົວ
ພຽງແຕ່ກູໄປຂີ້
ຫົກບໍ່ເປັນເລກເກົ້າ
ມັນແມ່ນເປັນຫົກ
ປ່ຽນໄປເປັນເກົ້າ
ຄາວດຽວມາໃໝ່
ເອງໄດ້ງ່າຍດາຍ ດອກນາ!

✻ ອັນນີ້ ຄວາມໂງ່ຜູ້
ຢືນຢູ່ພຽງມຸມຜິດ
ຄັນປ່ອຍ ຄົນແນວນີ້
ຢ້ານວ່າ ໃນຕໍ່ໜ້າ
ມອງໂລກມຸມດຽວ
ຊອບຖຽງຊາວບ້ານ
ເອົາໃຈຕົນຕື່ມ
ເຫັນຂີ້ວ່າຄຳ



## ພັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

✻ ***ມາ**ຮອດປັດຈຸບັນ ກອງປະຊຸມສະໄໝສາມັນ**ເທື່ອທີ 4** ຂອງສະພາປະຊາຊົນແຂວງທົ່ວປະເທດ ໄດ້ສຳເລັດເສັດສິ້ນລົງໄປແລ້ວເກືອບເຄິ່ງ ເຊິ່ງຍັງບໍ່ເທົ່າໃດແຂວງທີ່ພອມຊຸ້ນຊ້ຽວກະກຽມດຳເນີນຕາມແຜນທີ່ວາງໄວ້ ແລະ ຍັງແຂວງໃດບັ້ນພີ່ນ້ອງ ລອງຊອມສ່ອງໄປນຳກັນ ວ່າບັນຫາໃດທີ່ສັງຄົມ ຍົກຍໍ່ສະເໜີແກ້ ແລະບັນຫາໃດຍັງຄາຄ້າງ ຍາວນານຮຽກຊ້ຳເຮື້ອ ທັງເໜືອກາງແລະພາກໃຕ້ ຕິດຕາມພ້ອມພ່ຳກັນ.*

✻ ***ສະ**ແດງຄວາມເສຍໃຈ ນຳຄອບຄົວ**ອ້າຍຄຽງແກ້ວ ວົງບະລາດ** ທີ່ອໜ້າກົມຈັດຕັ້ງ-ພະນັກງານ ຄະນະເລຂາທິການສະພາແຫ່ງຊາດ ທີ່ສູນເສຍມາດາຜູ້ແສນເຄົາລົບຮັກ ໃນວັນທີ **10 ຜ່ານມາ** ລວມອາຍຸຂອງເພີ່ນໄດ້ **76** ປີ. ຄົບສະພາຮ່ວມທຸ້ມ **ບິແນ່ງໂສກາ ນຳເນີ!** ການຈາກລາສູນເສຍ ບໍ່ຖືກໃຜມີຫອບຮູ້ ຂໍໃຫ້ບຸນຊູຄ້ຳ ນຳອິນຍານແມ່ໄປສູ່ ສວາງສະຫວັນຊັ້ນຟ້າ ບ່ອນຄົບເອົ້າຊ່າລີ **ພຸ້ນເນີ!***

## ຊອບຍິ້ມ

**# ແອ່ນຕຸ້ງ**



**ເລື່ອງ: ຊື້ຕາມມັກ**

ມື້ເລກອອກ ທ້າວຕຸ້ຍບອກນ້ອງຊາຍໄປຊື້ເລກ

**ທ້າວຕຸ້ຍ:** ຈ່ອຍ ມຶງໄປຊື້ເລກໃຫ້ອ້າຍແດ່ 75 ເດີ, ຄັນມັນ ເຕັມ ມັກຫຍັງກະຊື້ໂລດ ປະມານ 30 ນາທີຕໍ່ມາ ທ້າວ ຈ່ອຍ ກໍມາຮອດ.

**ທ້າວຕຸ້ຍ:** ໄດ້ບໍ່?

**ທ້າວຈ່ອຍ:** ບໍ່ ມັນເຕັມແລ້ວ

**ທ້າວຕຸ້ຍ:** ມຶງຊື້ຫຍັງຊັ້ນ?

**ທ້າວຈ່ອຍ:** ຊື້ໝາກມ່ວງກໍ່ສົ້ມາກິນກັບເຂົ້າ

**ທ້າວຕຸ້ຍ:** ບັກເອນມຶງເອີຍ ກູບອກໃຫ້ຊື້ເລກ

**ທ້າວຈ່ອຍ:** ແນວອ້າຍບອກວ່າ ຄັນບໍ່ມີ 75 ມັກຫຍັງຊື້ໂລດ, ນ້ອງມັກໝາກມ່ວງ ກະເລີຍຊື້ໝາກມ່ວງກໍ່ສົ້ມາຍັດໃນກ, ນ້ອງບໍ່ໄດ້ມັກເລກ.

**ທ້າວຕຸ້ຍ:** !!!

## ຄະຕິເຕືອນໃຈ

**# ດອກສະຍອມ**

ຄັນໄດ້ຟັງຄຳເວົ້າ
ຊົມໃບໆຢ່າຟ້າວຈົ່ມ
ບາງເທື່ອຊົມຊີ້ເພຍ
ເມື່ອໜ້າຫາກຊີດີ




# ເອືອມ – ລະອາ – ເບື່ອ – ໜ່າຍ – ເປີດ

"ເອືອມ", "ລະອາ", "ເບື່ອ", "ໜ່າຍ" ແລະ "ເປີດ" ລ້ວນແຕ່ເປັນຄຳທີ່ມີບັນທຶກໄວ້ໃນວັດຈະນານຸກົມພາສາລາວ. ທັງຫ້າຄຳນີ້ເປັນຄຳທີ່ມີຄວາມໝາຍໃກ້ຄຽງກັນ ຫຼືເອີ້ນວ່າຄຳພ້ອມຄວາມໝາຍກໍໄດ້ ແຕ່ມີການໃຊ້ຄືແລະຕ່າງກັນດັ່ງນີ້:

"ເອືອມ" ເປັນຄຳວິເສດ ໝາຍເຖິງ "ເປີດໜ່າຍ, ອີ່ມ" ເຊັ່ນ

- ຈັ່ງແມ່ນຂ້ອຍເອືອມທ້າວອັນນີ້ແທ້ໆ!
- ກິນແຕ່ແນວເກົ່າຫຼາຍ ຂ້ອຍໂລດເອືອມ.

"ລະອາ" ເປັນຄຳກິລິຍາ ໝາຍເຖິງ "ເບື່ອໜ່າຍ ຫຼືໝົດກຳລັງໃຈ ຍ້ອນຖືກລົບກວນເຮັດໃຫ້ຮູ້ສຶກລຳຄານ" ເຊັ່ນໃນວັກໜຶ່ງຂອງມະຫາກາບທ້າວຮຸ່ງ-ທ້າວເຈືອງ:

- ເຂົາກໍດູລະອາລ້ຳ ຄົນຫານອ້າຍໄຂ່ ເຂົານັ້ນຮູ້ກ່າວອ້າງ ຄຳເຂັ້ມຂົ່ມແຂງ.
- ທຸກຄົນໃຜກໍລະອາກັບສິ່ງທີ່ລາວກະທຳ.

ຄຳວ່າ "ລະອາ" ນີ້ ມັກຈະຊ້ອນທ້າຍຄຳວ່າ "ເອືອມ" ເປັນ "ເອືອມລະອາ" ເຊັ່ນ

- ຈັ່ງແມ່ນເອືອມລະອາກັບມານຍາຂອງຍິງຄົນນັ້ນ.

"ເບື່ອ" ເປັນຄຳກິລິຍາ ໝາຍເຖິງ "ເປີດ, ໜ່າຍ, ບໍ່ຢາກ" ເຊັ່ນ

- ລາວເບື່ອໜັງໜ້າຂອງຄົນທີ່ຢືມແລ້ວບໍ່ສົ່ງ.
- ເບື່ອຄົນຂີ້ຕົວະຫຼອກຫຼວງ. - ກິນແຕ່ອາຫານເຍື່ອງນີ້ຊຸ່ມື້ ຈົນວ່າເບື່ອ.
- ຢູ່ແຕ່ບ່ອນເກົ່າຫຼາຍ ກໍຮູ້ສຶກເບື່ອ.

"ໜ່າຍ" ເປັນຄຳກິລິຍາ ໝາຍເຖິງ "ເປີດ, ອີ່ມ, ເບື່ອ, ບໍ່ພໍໃຈ, ຈືດຈາງ" ເຊັ່ນ

- ໜ່າຍໜໍນີ້ແທ້ໆເວີຍ ກິນແລ້ວ ຖ້ວຍກະບໍ່ລ້າງ.
- ໜ່າຍແທ້ໆ ຜູ້ມັກເວົ້າແຕ່ບໍ່ເຮັດ.
- ຍ້ອນອ້າຍທຸກຈົນ ຜູ້ສາວຈຶ່ງພາກັນໜ່າຍ.

"ເປີດ" ເປັນຄຳກິລິຍາ ໝາຍເຖິງ "ໜ່າຍ, ເບື່ອໜ່າຍ, ອີ່ມ, ໜີໄປ" ເຊັ່ນ

- ອາຫານເຍື່ອງນີ້ກິນຈົນເປີດແລ້ວ.
- ບໍ່ຮູ້ວ່າລາວເປີດໄປທາງໃດແລ້ວ?

ຄຳວ່າ ເບື່ອ-ໜ່າຍ-ເປີດ ບາງຄັ້ງກໍຊ້ອນໃສ່ກັນເປັນເບື່ອໜ່າຍ - ເປີດໜ່າຍ.

# ສິງກະໂປ ຍົກເລີກສະແດງຜົນກວດກ່ອນເຂົ້າປະເທດ






ມີການລາຍງານຂ່າວວ່າ: ກະຊວງສາທາລະນະສຸກສິງກະໂປ ເປີດເຜີຍວ່າ: ສິງກະໂປກຽມອະນຸຍາດໃຫ້ນັກທ່ອງທ່ຽວທີ່ໄດ້ຮັບວັກຊີນຍັງບໍ່ຄົບ ສາມາດເດີນທາງເຂົ້າປະເທດໄດ້ໂດຍບໍ່ຕ້ອງມີຜົນກວດເຊື້ອໂຄວິດ-19 ເປັນລົບກ່ອນອອກເດີນທາງນັບແຕ່ວັນທີ 13 ກຸມພາເປັນຕົ້ນໄປ.

ຖະແຫລງການຈາກກະຊວງສາທາລະນະສຸກສິງກະໂປ ລະບຸວ່າ: ລັດຖະບານກຽມຍົກເລີກກົດໃສ່ຜ້າອັດປາກ-ດັງ ລະຫວ່າງການໃຊ້ລະບົບຂົນສົ່ງສາທາລະນະ ເລີ່ມແຕ່ວັນທີ 13 ກຸມພາ ແລະ ຈະຍົກເລີກໜ່ວຍປະຕິບັດການສະເພາະກິດໂຄວິດ-19 ທີ່ຈັດຕັ້ງຂຶ້ນໃນເດືອນມັງກອນ 2019.

ທ່ານ ລໍເຣນ ຫວ່ອງ ຮອງນາຍົກລັດຖະມົນຕີສິງກະໂປ ເຊິ່ງເປັນປະທານຮ່ວມໜ່ວຍປະຕິບັດການສະເພາະກິດໂຄວິດ-19 ລະບຸວ່າ: "ສະຖານະການໂຄວິດຂອງເຮົາຍັງຊົງຕົວໃນໄລຍະຫລາຍເດືອນຜ່ານມາ ເຖິງວ່າຈະມີການເດີນທາງເພີ່ມຂຶ້ນ".

ທ່ານ ລໍເຣນ ຫວ່ອງ ກ່າວວ່າ: "ປະຊາກອນຂອງເຮົາມີພູມຕ້ານທານແບບໄຮບຣິດໃນລະດັບສູງ ຄວາມສ່ຽງຂອງການຕິດເຊື້ອທີ່ນຳໄປສູ່ການເຈັບເປັນຮຸນແຮງ ຫຼື ເສຍຊີວິດນັ້ນຕ່ຳ ເມື່ອທຽບໃສ່ພະຍາດທາງເດີນຫາຍໃຈປະຈຳຖິ່ນອື່ນໆເຊັ່ນ: ໄຂ້ຫວັດໃຫຍ່".

ທັງນີ້, ການຫຼຸດຜ່ອນຂໍ້ກຳນົດກ່ອນການອອກເດີນທາງ ແລະ ການບໍ່ບັງຄັບໃສ່ຜ້າອັດປາກ-ດັງ ຖືເປັນບາດກ້າວສຳຄັນທີ່ເນັ້ນວ່າ: ພະຍາດໂຄວິດເປັນພະຍາດປະຈຳຖິ່ນ ແລະ ເປັນບັນທັດຖານໃໝ່ສຳລັບສິງກະໂປ.

ເຖິງຢ່າງໃດກໍຕາມ, ກະຊວງສາທາລະນະສຸກສິງກະໂປ ລະບຸວ່າ: ນັກທ່ອງທ່ຽວທຸກຄົນທີ່ເດີນທາງມາສິງກະໂປທາງອາກາດ ຫຼື ທາງທະເລ ຍັງຕ້ອງສົ່ງແບບຟອມແຈ້ງຂໍ້ມູນສຸຂະພາບກ່ອນ ຫຼື ເມື່ອເດີນທາງມາເຖິງ.

# ໄທຈະເກັບຄ່າເຂົ້າເມືອງກັບນັກທ່ອງທ່ຽວຕ່າງປະເທດ ນັບແຕ່ວັນທີ 1 ມິຖຸນາປີນີ້ເປັນຕົ້ນໄປ



ມີການລາຍງານຂ່າວໃຫ້ຮູ້ວ່າ: ທ່ານ ພິພັດ ຣັດຊະກິດປະການ ລັດຖະມົນຕີກະຊວງການທ່ອງທ່ຽວ ແລະ ກິລາໄທ ໄດ້ກ່າວວ່າ: ກອງປະຊຸມຄະນະລັດຖະບານທີ່ຈັດຂຶ້ນໃນວັນທີ 14 ກຸມພາ 2023 ໄດ້ອະນຸມັດຂໍ້ສະເໜີກ່ຽວກັບການເກັບຄ່າເຂົ້າເມືອງກັບນັກທ່ອງທ່ຽວຕ່າງປະເທດ ທີ່ສະເໜີໂດຍຄະນະກຳມະການນະໂຍບາຍການທ່ອງທ່ຽວແຫ່ງຊາດໄທ ກ່ອນໜ້ານີ້ ແລະ ຈະປະຕິບັດຢ່າງເປັນທາງການນັບແຕ່ວັນທີ 1 ມິຖຸນາປີນີ້ ເປັນຕົ້ນໄປ.

ການເກັບຄ່າເຂົ້າເມືອງແມ່ນແບ່ງເປັນ 2 ປະເພດ ຄື: ສຳລັບນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າເມືອງໂດຍຜ່ານທາງອາກາດ ແມ່ນເກັບ 300 ບາດຕໍ່ຄົນ, ສ່ວນນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າເມືອງໂດຍຜ່ານທາງບົກ ແລະ ທາງນ້ຳ, ແມ່ນເກັບ 150 ບາດຕໍ່ຄົນ.

ກະຊວງການທ່ອງທ່ຽວ ແລະ ກິລາໄທແຈ້ງ ໃຫ້ຮູ້ວ່າ: ເງິນຄ່າເຂົ້າເມືອງທີ່ຈ່າຍໂດຍນັກທ່ອງທ່ຽວຕ່າງປະເທດຈະຖືກໃຊ້ເປັນຄ່າໃຊ້ຈ່າຍໃນຫຼາຍດ້ານ ເຊັ່ນ: ຄ່າປະກັນໄພຂອງນັກທ່ອງທ່ຽວໃນໄລຍະຢູ່ໄທ, ຄ່າອະນາໄມ ແລະ ຄ່າຊຸກຍູ້ການພັດທະນາທຸລະກິດການທ່ອງທ່ຽວເປັນຕົ້ນ.

# ຫວຽດນາມ ໄດ້ຮັບເລືອກຕັ້ງເປັນ
## ຮອງປະທານຄະນະກຳມະການອະນຸລັກຮັກສາເສີສັນວັດທະນະທຳ

ວິທະຍຸກະຈາຍສຽງຫວຽດນາມ ລາຍງານວ່າ: ໃນຂອບເຂດກອງປະຊຸມ ຄັ້ງທີ 16 ຂອງຄະນະກຳມະການ ລະຫວ່າງລັດຖະບານສົນທິສັນຍາກ່ຽວກັບການອະນຸລັກຮັກສາ ແລະ ເສີມຂະຫຍາຍຄວາມຫຼາກຫຼາຍຂອງສີສັນວັດທະນະທຳ (ສົນທິສັນຍາ 2005) ຂອງອົງການອຸຍແນັສໂກ (UNESCO) ເຊິ່ງດຳເນີນແຕ່ວັນທີ 7-10 ກຸມພາຜ່ານມາ ຢູ່ນະຄອນຫຼວງປາຣີ ປະເທດຝຣັ່ງ, ຫວຽດນາມໄດ້ຮັບຄວາມໄວ້ວາງໃຈຮັບເລືອກຕັ້ງເປັນຮອງປະທານຄະນະກຳມະການ, ຕາງໜ້າໃຫ້ແກ່ພາກພື້ນອາຊີ-ປາຊີຟິກ.

ຂ່າວລະບຸວ່າ: ຫວຽດນາມ ໄດ້ດຳລົງຕຳແໜ່ງນີ້ 2 ຄັ້ງລຽນຕິດ ໄດ້ສະແດງໃຫ້ເຫັນເຖິງທີ່ຕັ້ງບົດບາດ ແລະ ອິດທິພົນຊື່ສຽງທີ່ນັບມື້ນັບສູງຂຶ້ນຂອງຫວຽດນາມ ບົນເວທີສາກົນ ແລະ ສະແດງໃຫ້ເຫັນເຖິງການສະໜັບສະໜູນ, ຄວາມເຊື່ອໝັ້ນຂອງປະຊາຄົມສາກົນຕໍ່ຄວາມສາມາດໃນການປະກອບສ່ວນ ແລະ ກຳລັງຄວາມສາມາດບໍລິຫານຂອງຫວຽດນາມ ໃນບັນດາກົນໄກຫຼາຍຝ່າຍທົ່ວໂລກ, ຮັບຮູ້ການປະກອບສ່ວນຢ່າງຕັ້ງໜ້າຂອງຫວຽດນາມ ທີ່ມີຕໍ່ UNESCO ກໍຄືໃນຄວາມພະຍາຍາມຊຸກຍູ້ບົດບາດຂອງວັດທະນະທຳ, ການປະດິດຄິດສ້າງແກ່ການພັດທະນາແບບຍືນຍົງ, ກວມລວມ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ.

ກອງປະຊຸມຄັ້ງທີ 16 ຂອງຄະນະກຳມະການລະຫວ່າງລັດຖະບານ ສົນທິສັນຍາກ່ຽວກັບການອະນຸລັກຮັກສາ ແລະ ເສີມຂະຫຍາຍຄວາມຫຼາກຫຼາຍຂອງສີສັນວັດທະນະທຳຂອງ UNESCO ມີຜູ້ແທນເຂົ້າຮ່ວມເກືອບ 400 ທ່ານ ແລະ ນັກສັງເກດການມາຈາກ 24 ປະເທດສະມາຊິກຂອງຄະນະກຳມະການ ແລະ ເກືອບ 100 ປະເທດຂອງອົງການຈັດຕັ້ງສາກົນ ແລະ ບັນດາອົງການຈັດຕັ້ງວັດທະນະທຳ, ສິລະປະ. ຄະນະຜູ້ແທນຫວຽດນາມ ໄດ້ເຂົ້າຮ່ວມຢ່າງເປັນເຈົ້າການ ແລະ ຕັ້ງໜ້າໃນທຸກເນື້ອໃນຂອງກອງປະຊຸມ.

# ອະດີດລັດຖະມົນຕີການຕ່າງປະເທດໄຊປຣັດ ໄດ້ຮັບການເລືອກຕັ້ງເປັນປະທານາທິບໍດີ



ອີງຕາມການລາຍງານຂ່າວ ໃຫ້ຮູ້ວ່າ: ທ່ານ ນິໂກສ ຄຣິສໂຕດູລິເດັສ ອະດີດລັດຖະມົນຕີກະຊວງການຕ່າງປະເທດໄຊປຣັດ, ຜູ້ສະໝັກຮັບເລືອກຕັ້ງອິດສະຫຼະ ໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງໃນການປ່ອນບັດເລືອກຕັ້ງປະທານາທິບໍດີໄຊປຣັດ ຮອບ 2 ທີ່ຈັດຂຶ້ນໃນວັນທີ 12 ກຸມພານີ້, ກາຍເປັນປະທານາທິບໍດີໄຊປຣັດຄົນໃໝ່.

ອີງຕາມສະຖິຕິທາງການຂອງລັດຖະບານໄຊປຣັດ, ໃນຈຳນວນບັດທີ່ນຳໃຊ້ໄດ້ 394.000 ໃບ, ອັດຕາສ່ວນໄດ້ຮັບຄະແນນສຽງຂອງທ່ານ ຄຣິສໂຕດູລິເດັສ ກວມ 51,97%; ສ່ວນອັດຕາໄດ້ຮັບຄະແນນສຽງຂອງທ່ານ ອັນເດຣັສ ມາໂບຣຢີອັນນິສ. ຜູ້ສະໝັກຮັບເລືອກຕັ້ງທີ່ໄດ້ຮັບການສະໜັບສະໜູນຈາກພັກກ້າວໜ້າປະຊາຊົນແຮງງານ ເຊິ່ງເປັນພັກຝ່າຍຄ້ານນັ້ນ ກວມ 48,03%.

ທ່ານ ຄຣິສໂຕດູລິເດັສ ຈະສາບານຕົວຂຶ້ນຮັບຕຳແໜ່ງໃນວັນທີ 1 ມີນາໜ້ານີ້ ໄຊປຣັດ ປະຕິບັດລະບອບມີປະທານາທິບໍດີເປັນປະມຸກລັດ, ໄລຍະຕຳແໜ່ງຂອງປະທານາທິບໍດີແມ່ນ 5 ປີ.




# ບາງບົດຮຽນກ່ຽວກັບການຄຸ້ມຄອງອົງການເອັນຈີໂອ (NGO)




ໃນບົດຄວາມປະຈຳວັນນີ້, ຜູ້ຂຽນມີເລື່ອງທີ່ຄວນເບິ່ງໄວເປັນບົດຮຽນກ່ຽວກັບການຄຸ້ມຄອງອົງການເອັນຈີໂອ (NGO) ຫຼື ທີ່ເອີ້ນກັນວ່າອົງການທີ່ບໍ່ຂຶ້ນກັບລັດຖະບານ. ອົງການ NGO ນີ້ມີທັງພາກສ່ວນທີ່ຈັດຕັ້ງຂຶ້ນຢູ່ພາຍໃນປະເທດ ເອີ້ນວ່າ Local NGO ແລະ ພາກສ່ວນຂອງຕ່າງປະເທດ. ອົງການທີ່ບໍ່ຂຶ້ນກັບລັດຖະບານສ່ວນໃຫຍ່ເຮັດວຽກສົງເຄາະຊ່ວຍເຫຼືອຊຸມຊົນ, ທ້ອງຖິ່ນຫ່າງໄກສອກຫຼີກ ເພື່ອໃຫ້ສັງຄົມດັ່ງກ່າວເຂົ້າເຖິງການບໍລິການດ້ານຕ່າງໆ. ຢູ່ ສປປລາວ ພວກເຮົາ, ອົງການ NGO ໄດ້ມີບົດບາດສຳຄັນໃນການປະກອບສ່ວນພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນການພັດທະນາຊົນນະບົດ ແນໃສ່ຫຼຸດຜ່ອນຄວາມທຸກຍາກ.

ຕໍ່ໄປຂໍສະເໜີບາງບົດຮຽນຂອງປະເທດຣັດເຊຍ... ຕໍ່ໄປຂໍສະເໜີບາງບົດຮຽນຂອງປະເທດຮົງກາລີ, ສະຫະພັນລັດເຊຍ ແລະ ສປ.ຈີນ ກ່ຽວກັບມາດຕະການຄຸ້ມຄອງອົງການ NGO.

ຢູ່ປະເທດຮົງກາລີ, ທາງການຂອງປະເທດນີ້ໄດ້ຮ່າງ ແລະ ປະກາດໃຊ້ກົດໝາຍໃນຕົ້ນປີ 2017 ເພື່ອຄຸ້ມຄອງອົງການ NGO ທີ່ຈັດຕັ້ງຂຶ້ນຢູ່ພາຍໃນປະເທດຕົນເອງ. ກົດໝາຍມີເປົ້າໝາຍສົ່ງເສີມຄວາມໂປ່ງໃສດ້ານການເງິນຂອງອົງການ NGO ໂດຍໄດ້ກຳນົດໃຫ້ແຕ່ລະອົງການດັ່ງກ່າວ ຕ້ອງລາຍງານຢ່າງຈຳແຈ້ງໃຫ້ທາງການຊາບກ່ຽວກັບງົບປະມານຂອງຕົນທີ່ໄດ້ຮັບການຊ່ວຍເຫຼືອຈາກຕ່າງປະເທດ ໂດຍມີເນື້ອໃນລະອຽດວ່າ ອົງການ NGO ໃດໄດ້ຮັບການຊ່ວຍເຫຼືອທາງການເງິນ ຈາກຕ່າງປະເທດໃນອັດຕາ 5-10% ຂອງງົບປະມານເຄື່ອນໄຫວທາງໝົດຂອງຕົນ ຕ້ອງໄດ້ແຈ້ງໃຫ້ທາງການ ແລະ ທົ່ວສັງຄົມຊາບ. ຖ້າອົງການໃດລະເມີດຂໍ້ກຳນົດນີ້ ກໍຈະຖືກຍົກເລີກ ຫຼື ຢຸດການເຄື່ອນໄຫວຢູ່ສະຫະພັນລັດເຊຍ, ກອງປະຊຸມສະພາດູມາ (ສະພາຕ່ຳ ຫຼື ສະພາຜູ້ແທນລາສະດອນ), ໃນຄັ້ງວັນທີ 15 ພຶດສະພາ 2015 ໄດ້ລົງມະຕິດ້ວຍສຽງສ່ວນຫຼາຍ (442 ຕໍ່ 3 ສຽງ) ຫ້າມບັນດາອົງການ NGO ຂອງຕ່າງປະເທດທີ່ຖືກຂຶ້ນບັນຊີວ່າ ເປັນອົງການ "ບໍ່ເພິ່ງປາຖະໜາ" ສືບຕໍ່ເຄື່ອນໄຫວຢູ່ສະຫະພັນລັດເຊຍ. ກະຊວງການຕ່າງປະເທດ ແລະ ອົງການໄອຍະການສູງສຸດມີໜ້າທີ່ຕັດສິນ ແລະ ຂຶ້ນບັນຊີອົງການ NGO ທີ່ "ບໍ່ເພິ່ງປາຖະໜາ". ນອກຈາກຖືກຫ້າມເຄື່ອນໄຫວແລ້ວ ອົງການ NGO ທີ່ບໍ່ເພິ່ງປາຖະໜາ ຍັງອາດໄດ້ຮັບໂທດຕັດອິດສະຫຼະພາບສູງສຸດ 6 ປີ ແລະ ເສຍເງິນປັບໃໝສູງສຸດ 500.000 ຣູບ ຫຼື ປະມານ 10 ພັນໂດລາສະຫະລັດ (ຕາມອັດຕາແລກປ່ຽນໃນເວລານັ້ນ).

ຢູ່ ສປ.ຈີນ ກອງປະຊຸມຄະນະປະຈຳສະພາປະຊາຊົນແຫ່ງຊາດຈີນ ຄັ້ງວັນທີ 28 ເມສາ 2016 ໄດ້ຮັບຮອງເອົາກົດໝາຍວ່າດ້ວຍການຄຸ້ມຄອງອົງການ NGO ຕ່າງປະເທດ (ດ້ວຍຄະແນນ 147 ຕໍ່ 1 ສຽງ). ກົດໝາຍໄດ້ກຳນົດໃຫ້ທຸກໆອົງການ NGO ຕ່າງປະເທດ ຕ້ອງໄດ້ຮັບອະນຸມັດຈາກທາງການກ່ອນ ຈຶ່ງຈະສາມາດເຄື່ອນໄຫວແບບຖາວອນໂດຍມີສຳນັກງານປະຈຳ ຫຼື ເຄື່ອນໄຫວແບບຊົ່ວຄາວ. ພາຍໃຕ້ກົດໝາຍສະບັບນີ້, ກະຊວງປ້ອງກັນຄວາມສະຫງົບ (ສຳລັບຂັ້ນສູນກາງ) ແລະ ຫ້ອງການຕຳຫຼວດແຂວງ (ສຳລັບທ້ອງຖິ່ນ) ມີໜ້າທີ່ຮັບຜິດຊອບຂຶ້ນທະບຽນບັນດາອົງການ NGO. ອົງການ NGO ຕ່າງປະເທດທີ່ເຄື່ອນໄຫວໂດຍບໍ່ໄດ້ຮັບອະນຸຍາດຈາກທາງການຈີນ ກໍຈະຖືກລົງໂທດຕາມກົດໝາຍ. ຂ່າວໃຫ້ຮູ້ວ່າຈຸດປະສົງຕົ້ນຕໍຂອງກົດໝາຍສະບັບນີ້ ເຊິ່ງມີຜົນບັງຄັບໃຊ້ແຕ່ວັນທີ 1 ມັງກອນ 2017 ເປັນຕົ້ນມາ ແມ່ນເພື່ອຄຸ້ມຄອງການເຄື່ອນໄຫວຂອງອົງການ NGO ຕ່າງປະເທດໃນ ສປ.ຈີນ ເພື່ອປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງອົງການເຫຼົ່ານີ້ຕາມກົດໝາຍ ແລະ ສົ່ງເສີມການຮ່ວມມື ແລະ ແລກປ່ຽນບົດຮຽນ, ປະສົບການລະຫວ່າງອົງການ NGO ຕ່າງປະເທດກັບພາກສ່ວນກ່ຽວຂ້ອງຂອງ ສປ.ຈີນ.







## ເໝາະກັບອາຊີບ

*# ບ່າວກະບື*

ຫົວໜ້າພະແນກການເງິນເມືອງ ສຳພາດຜູ້ສະໝັກເອົາຕຳແໜ່ງຜູ້ຄຸ້ມຄອງບັນຊີ: ທ່ານຫົວໜ້າພະແນກຖາມຜູ້ສະໝັກວ່າ: "ສອງບວກສອງເປັນເທົ່າໃດ?"

ຜູ້ສະໝັກໂດດລຸກຂຶ້ນ, ໄຂປະຕູອອກໄປ ແນມເຮັດຕາລ່ອກແລ່ກຂຶ້ນໆລົງໆຕາມບໍລິເວນຫ້ອງໂຖງ. ຈາກນັ້ນ ເຂົາອັດປ່ອງຢ້ຽມທຸກໆບານ, ກັບຄືນມາໂຕະບ່ອນເກົ່າ ແລະ ເວົ້າຊຸບຊິບວ່າ: "ແລ້ວທ່ານຄ... ຢາກໃຫ້ເປັນເທົ່າໃດ"

ພໍໄດ້ຍິນແນວນັ້ນ ທ່ານຫົວໜ້າເລີຍຕົກລົງຮັບຜູ້ສະໝັກຄົນນັ້ນເຂົ້າການກັບໜ້ອງໂລດ.

## FIT FOR THE JOB

***# BAOKBU***

The city financial service chief was interviewing an applicant for the position of accountant superintendent asked the candidate. "How much is two plus two ?"

The applicant jumped up, opened the door, and peered up and down the hall. Then he closed all the windows, returned to the desk and whispered: "How much do you want it to be?" Hearing that the service chief hired the candidate on the spot.




ຄົບງາມຊົບລົດງາມ ແຕ່ມາລະຍາດຊາມ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ :**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຄະນະບັນນາທິການ :**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ຫອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ